# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາລານລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

01-07 ກຸມພາ 2026
ປີທີ 15
ສະບັບທີ 1052
ລາຍສັບປະດາ


## ປະທານສະພາແຫ່ງຊາດລາວ ພົບປະເລຂາທິການໃຫຍ່ກອມມູນິດຫວຽດນາມ



(ສພຊ) - ຕອນບ່າຍວັນທີ 5 ກຸມພາ 2026 ທີ່ສະພາແຫ່ງຊາດ, ສະຫາຍ ໄຊສົມພອນ ພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບ ແລະ ພົບປະກັບສະຫາຍ ໂຕ ເລິມ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ໃນໂອກາດເດີນ

ອ່ານຕໍ່ໜ້າ 3

## ປອ.ໄຊສົມພອນ ພົມວິຫານ ພົບປະປະທານສະພາແຫ່ງຊາດຫວຽດນາມ



(ສພຊ) - ວັນທີ 5 ກຸມພາ 2026 ທີ່ສະພາແຫ່ງຊາດ, ສະຫາຍ ໄຊສົມພອນພົມວິຫານ ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ໄດ້ພົບປະກັບສະຫາຍ ເຈິ່ນ ແທັງ ເໝິນ ກຳມະການກົມການເມືອງສູນກາງພັກກອມ ມູນິດຫວຽດນາມ, ປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ໃນໂອກາດທີ່ຮ່ວມກັບສະຫາຍເລຂາທິການໃຫຍ່ ໂຕ ເລິມ ມາຢ້ຽມຢາມລັດຖະກິດທີ່ ສປປລາວ.

ໃນການພົບປະ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບ ແລະ ສະແດງຄວາມຊົມເຊີຍຢ່າງສຸດໃຈຕໍ່ຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ, ພ້ອມທັງສະແດງຄວາມ

ອ່ານຕໍ່ໜ້າ 8



### ແນວຄິດປະທານ
## ໄກສອນ ພົມວິຫານ
### ຜູ້ນຳທີ່ປະຊາຊົນເຄົາລົບຮັກ

ພໍແຕ່ໄດ້ກຳເນີດຂຶ້ນ ພັກເຮົາໄດ້ສົມທົບລັດທິຮັກຊາດທີ່ແທ້ຈິງ ກັບອຸດົມຄະຕິປະຕິວັດອັນຜ່ອງໃສ ເພື່ອນຳພາປະຊາຊົນເຮົາຕໍ່ສູ້ຍາດເອົາຄວາມເປັນເອກະລາດ, ອິດສະຫຼະພາບ, ສ້າງປະເທດຊາດໃຫ້ຮັ່ງມີເຂັ້ມແຂງ ແລະ ນຳເອົາຄວາມສົມບູນພູນສຸກມາສູ່ປະຊາຊົນບັນດາເຜົ່າ, ມູນເຊື້ອຮັກຊາດໄດ້ເປັນບ່ອນອີງໃຫ້ແກ່ປະຊາຊົນເຮົາ ສາມາດຜ່ານຜ່າທຸກສະຖານະການແຫ່ງການຕໍ່ສູ້ທີ່ດຸເດືອດຂ້ຽວຂາດ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 344)

ຄວາມຈົງຮັກພັກດີຕໍ່ຊາດຕໍ່ປະຊາຊົນ ກໍແມ່ນອາລົມຈິດປະຕິວັດອັນສະເໝີຕົ້ນສະເໝີປາຍຂອງສະມາຊິກພັກທຸກຄົນ ນັບແຕ່ສະມາຊິກທຳມະດາ ຈົນເຖິງການນຳຂອງພັກ ເຊິ່ງເວລາໃດກໍຖືຄວາມຢູ່ເຢັນເປັນສຸກ, ຄວາມຢູ່ດີກິນດີຂອງປະຊາຊົນ ແລະ ຄວາມຈະເລີນຮຸ່ງເຮືອງຂອງປະເທດຊາດ ເປັນຄວາມສຸກ ແລະ ຄວາມປາຖະໜາອັນແຮງກ້າຂອງຕົນ.

(ນິພົນເລືອກເຟັ້ນ ເຫຼັ້ມ 3, ໜ້າ 345-346)

ອ່ານຕໍ່ສະບັບໜ້າ

## ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ປະຈຳເຂດເລືອກຕັ້ງທີ 10 ລົງໂຄສະນາຫາສຽງ




(ສພຊ) - ວັນທີ 6 ກຸມພານີ້, ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ຊຸດທີ X ໄດ້ລົງໂຄສະນາຫາສຽງແລະສະເໜີຕົວຕໍ່ຜູ້ມີສິດເລືອກຕັ້ງຢູ່ສະໂມສອນຂອງແຂວງ ໂດຍການນຳພາຂອງທ່ານ ລຳໄມ ກູດລາວົງ ຄະນະປະຈຳພັກແຂວງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ, ມີການນຳ ແລະ ພະນັກງານຫຼັກແຫຼ່ງຂອງແຂວງເຂົ້າຮ່ວມຮັບຟັງ.

ຈຸດປະສົງກໍເພື່ອຮັບປະກັນໃຫ້ແກ່ການໂຄສະນາຫາສຽງຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ໄດ້

ອ່ານຕໍ່ໜ້າ 11




## ສ້າງຄວາມໝັ້ນໃຈໃຫ້ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ເພດຍິງ




(ສພຊ) - ໃນລະຫວ່າງວັນທີ 2-3 ກຸມພາ 2026 ທີ່ເມືອງວັງວຽງ ແຂວງວຽງຈັນ, ຄະນະສະມາຊິກສະພາແຫ່ງຊາດເພດຍິງ ຊຸດທີ IX ໄດ້ຈັດກອງປະຊຸມເຝິກອົບຮົມໃຫ້ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ທີ່ເປັນເພດຍິງ ໂດຍການເປັນປະທານຂອງທ່ານ ນາງ ທຸມມາລີ ວົງພະຈັນ ກຳມະການສູນກາງພັກ, ປະທານຄະນະສະມາຊິກສະ

ອ່ານຕໍ່ໜ້າ 3

## ຄະນະຜູ້ແທນລາວ ສຳເລັດການເຂົ້າຮ່ວມກອງປະຊຸມຄະນະບໍລິຫານງານ APF

(ສພຊ) - ລະຫວ່າງວັນທີ 29 ມັງກອນ - 2 ກຸມພາ 2025, ຄະນະຜູ້ແທນສະພາແຫ່ງຊາດ ແຫ່ງ ສປປລາວ ນຳໂດຍທ່ານ ສັນຍາ ປຣະເສີດ ກຳມະການຄະນະປະຈຳສະພາແຫ່ງຊາດ,

ອ່ານຕໍ່ໜ້າ 2





7 ອາຫານ... (ໜ້າ 9)



Greece ເລີ່ມຂະບວນການ... (ໜ້າ 10)




ຕັດໄມ້ທຳລາຍປ່າ... (ໜ້າ 12)

**ຊົມເຊີຍວັນສ້າງຕັ້ງສະຫະພັນກຳມະບານລາວ ຄົບຮອບ 70ປີ (1ກຸມພາ 1956-1ກຸມພາ 2026) ຢ່າງສຸດໃຈ!**

# ກອງປະຊຸມ AIPACODD ທີ່ອິນໂດເນເຊຍ




(ສພຊ) - ທ່ານ ຈັນທະວົງ ແສນອາມາດມົນຕີ ຮອງປະທານກຳມາທິການການຕ່າງປະເທດ ພ້ອມດ້ວຍຄະນະ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຄະນະກຳມະການຄົ້ນຄວ້າກ່ຽວກັບການປັບປຸງພາລະບົດບາດຂອງສະພາທີ່ປຶກສາໄອປາກ່ຽວກັບໄພອັນຕະລາຍຂອງຢາເສບຕິດ (AIPACODD) ໃນລະຫວ່າງວັນທີ 27-30 ມັງກອນ 2026 ທີ່ນະຄອນຫຼວງຈາກາຕາ, ປະເທດອິນໂດເນເຊຍ ພາຍໃຕ້ການເປັນປະທານຮ່ວມຂອງທ່ານ ປອ. ເຊມ ວິທະຍາ (Chem Widhya) ເລຂາທິການໃຫຍ່ AIPA ແລະ ທ່ານ ໂຈນາທານ ຄີດ ຟລໍເຣສ (Jonathan Keith Flores) ປະທານຄະນະກຳມະການຄົ້ນຄວ້າກ່ຽວກັບການປັບປຸງພາລະບົດບາດຂອງ AIPACODD ເຊິ່ງມີຄະນະຜູ້ແທນຈາກ 8 ປະເທດສະມາຊິກລັດຖະສະພາລະຫວ່າງຊາດອາຊຽນຫຼືໄອປາ(AIPA)ເຂົ້າຮ່ວມ.

ກອງປະຊຸມຄັ້ງນີ້, ໄດ້ປຶກສາຫາລື ແລະ ແລກປ່ຽນຄຳຄິດຄຳເຫັນພາຍໃຕ້ຫົວຂໍ້ “ການເຕົ້າໂຮມຂອງລັດຖະສະພາບັນດາປະເທດອາຊຽນ ເພື່ອຄວາມເປັນເອກະພາບ ແລະ ຍືນຍົງ ໃນການແກ້ໄຂສິ່ງທ້າທາຍກ່ຽວກັບບັນຫາຢາເສບຕິດໃນປັດຈຸບັນ” ພ້ອມກັນນີ້, ຍັງໄດ້ປຶກສາຫາລື ແລະ ແລກປ່ຽນຂໍ້ມູນຂ່າວສານກ່ຽວກັບມາດຕະການໃນການຄວບຄຸມຢາເສບຕິດໃນປະເທດຂອງຕົນ ລວມເຖິງສິ່ງທ້າທາຍທີ່ເກີດຂຶ້ນໃນປັດຈຸບັນ, ການບຳບັດຮັກສາແລະການຟື້ນຟູຜູ້ຕິດສານເສບຕິດ, ການນຳໃຊ້ມາດຕະການເພື່ອຫຼຸດຜ່ອນການນຳໃຊ້ຢາເສບຕິດແລະການກຳນົດເອົາທິດທາງໃໝ່ສຳລັບການຮ່ວມມືຂອງລັດຖະສະພາໃນການແກ້ໄຂບັນຫາທີ່ທ້າທາຍດ້ານຄວາມໝັ້ນຄົງ ແລະ ສາທາລະນະສຸກທີ່ຮີບດ່ວນຂອງອາຊຽນ; ຜ່ານການຮັບຟັງ ແລະ ແລກປ່ຽນຄວາມຄິດເຫັນຂອງບັນດາຄະນະຜູ້ແທນແຕ່ລະປະເທດ ກໍໄດ້ມີການຕົກລົງຮັບຮອງເອົາເນື້ອໃນພື້ນຖານດັ່ງກ່າວຢ່າງເປັນເອກະສັນ ເຊິ່ງເປັນຂີດໝາຍອັນສຳຄັນອີກບາດກ້າວໜຶ່ງຂອງ AIPACODD ທີ່ສະທ້ອນໃຫ້ເຫັນແນວທາງໃໝ່ໃນການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມແລະການສ້າງລະບົບທີ່ເຂັ້ມແຂງ, ຍືນຍົງ ແລະ ຍາວນານອີກດ້ວຍ. ນອກຈາກນັ້ນ, ກອງປະຊຸມຍັງໄດ້ຕົກລົງເຫັນດີກ່ຽວກັບເງື່ອນໄຂການອ້າງອີງຂອງຄະນະກຳມະການຄົ້ນຄວ້າການປັບປຸງບົດບາດຂອງ AIPACODD ເປັນການຮ່ວມມືເພື່ອແກ້ໄຂບັນຫາອາຊະຍາກຳຂ້າມຊາດ ທີ່ສະເໜີໂດຍທ່ານເລຂາທິການໃຫຍ່ໄອປາ; ພ້ອມດຽວກັນນີ້, ປະທານກອງປະຊຸມຍັງໄດ້ຍົກໃຫ້ເຫັນຄວາມສຳຄັນໃນການປັບປຸງບົດບາດຂອງ AIPACODD ຄັ້ງນີ້ ທີ່ຈະສະທ້ອນເຖິງການຮັບຮູ້ຮ່ວມກັນຕໍ່ການຜັນຂະຫຍາຍເຄືອຂ່າຍອາຊະຍາກຳພາກພື້ນໃນປັດຈຸບັນທີ່ບໍ່ໄດ້ພັດທະນາຈາກການຄ້າຢາເສບຕິດເທົ່ານັ້ນ ແຕ່ຍັງໄດ້ຂະຫຍາຍໄປຫຼາຍຂົງເຂດເຊັ່ນ: ການຄ້າມະນຸດ, ການລັກລອບຄ້າຂາຍສັດປ່າ, ການກໍ່ອາຊະຍາກຳທາງອິນເຕີເນັດ ແລະ ການຟອກເງິນ. ເພາະສະນັ້ນ, ກອງປະຊຸມໄດ້ຊີ້ໃຫ້ເຫັນວ່າ ລັດຖະສະພາລະຫວ່າງຊາດອາຊຽນຈະຕ້ອງຕອບສະໜອງຕໍ່ກັບບັນຫາດັ່ງກ່າວໃຫ້ໄວ, ເໝາະສົມ ແລະ ຖືເອົາການປຶກສາຫາລືຫາໃນຄັ້ງນີ້ ເປັນບາດກ້າວທຳອິດທີ່ສຳຄັນຂອງການປັບປຸງ ແລະ ບົດບາດຂອງ AIPACODD.

ການເຂົ້າຮ່ວມກອງປະຊຸມຄັ້ງນີ້, ທ່ານ ຈັນທະວົງ ແສນອາມາດມົນຕີ ໄດ້ມີຄຳເຫັນຫຼາຍເນື້ອໃນຕາມວາລະກອງປະຊຸມ ເຊິ່ງເນັ້ນໃຫ້ເຫັນວ່າຢາເສບຕິດ ປັນສິ່ງທີ່ຜິດກົດໝາຍ ແລະ ທລາຍສຸຂະພາບຂອງປະຊາຊົນ ໂດຍສະເພາະໄວໜຸ່ມ ແລະ ອາຊະຍາກຳຂ້າມຊາດ ທີ່ຍັງຄົງເປັນໄພຂົ່ມຂູ່ທີ່ສຳຄັນຕໍ່ ສປປລາວ ເຊິ່ງກະຕຸ້ນໃຫ້ມີການປະຕິຮູບກົດໝາຍຢ່າງຕໍ່ເນື່ອງ ລວມທັງການປັບປຸງກົດໝາຍວ່າດ້ວຍການຄວບຄຸມຢາເສບຕິດ, ກົດໝາຍວ່າດ້ວຍການຕໍ່ຕ້ານການຄ້າມະນຸດ ແລະ ກົດໝາຍອາຍາ ທັງຢໍ້າວ່າສປປລາວ ໄດ້ມີຄວາມພະຍາຍາມ ແລະ ຊຸກຍູ້ການບັງຄັບໃຊ້ກົດໝາຍໃຫ້ເຂັ້ມແຂງຂຶ້ນ ແຕ່ກໍຍັງມີສິ່ງທ້າທາຍທີ່ຄົງຄ້າງເຊັ່ນ: ຂໍ້ຈຳກັດດ້ານຄວາມສາມາດ ແລະ ຄວາມຊ່ຽວຊານສະເພາະທາງ ແລະ ອາຊະຍາກຳດິຈິຕອນທີ່ພັດທະນາຢ່າງວ່ອງໄວ ເຊິ່ງລ້ວນແຕ່ເປັນບັນຫາທີ່ສຳຄັນທີ່ຈະຕ້ອງເພີ່ມທະວີການຮ່ວມມືລະຫວ່າງສະມາຊິກ AIPA ເພື່ອແບ່ງປັນແລກປ່ຽນປະສົບການດ້ານນິຕິບັນຍັດ, ແນວທາງປະຕິບັດທີ່ມີປະສິດທິຜົນ ແລະ ວິທີແກ້ໄຂຕົວຈິງທີ່ເໝາະສົມກັບສະພາບການຂອງແຕ່ລະປະເທດ; ພ້ອມກັນນີ້ ຍັງໄດ້ຕີລາຄາສູງຕໍ່ບົດບາດ ແລະ ຄວາມສຳຄັນຂອງກົນໄກອາຊຽນ ເຊັ່ນ SOMTC ແລະ ASOD ໃນການຮ່ວມມືດ້ານການປະຕິບັດ, ການປະສານງານດ້ານນະໂຍບາຍ ແລະ ການສ້າງຄວາມສາມາດໃນການຕ້ານອາຊະຍາກຳຂ້າມຊາດຂອງ AIPA ໃນການປຶກສາຫາລື ແລະ ສອດຄ່ອງທາງດ້ານກົດໝາຍທັງເນັ້ນຕື່ມວ່າ ການປັບປຸງບົດບາດ AIPACODD ຄວນກຳນົດຢ່າງຈະແຈ້ງວ່າ ບົດບາດ ແລະ ການມີສ່ວນຮ່ວມຂອງລັດຖະສະພາບັນຫາໃດແດ່ ໂດຍສະເພາະການປະສານງານ, ການຕິດຕາມກວດກາ ແລະ ການເຈລະຈາໃນການອອກນະໂຍບາຍລະຫວ່າງປະເທດສະມາຊິກ AIPA ເພື່ອໃຫ້ສອດຄ່ອງກັບການຮ່ວມມືຂອງອາຊຽນທີ່ປະຕິບັດຜ່ານມາແລ້ວ. ນອກຈາກນີ້, ທ່ານຮອງປະທານກຳມາທິການການຕ່າງປະເທດຍັງໄດ້ປະກອບຄຳເຫັນຈຳນວນໜຶ່ງຕໍ່ຮ່າງມະຕິການເຕົ້າໂຮມຂອງລັດຖະສະພາລະຫວ່າງຊາດອາຊຽນ ເພື່ອຄວາມເປັນເອກະພາບ ແລະ ຍືນຍົງ ໃນການແກ້ໄຂສິ່ງທ້າທາຍບັນຫາຢາເສບຕິດໃນປັດຈຸບັນອີກດ້ວຍ.



## ຄະນະ...

(ຕໍ່ຈາກໜ້າ 1)

ປະທານກຳມາທິການການຕ່າງປະເທດ ໄດ້ສຳເລັດການເຂົ້າຮ່ວມກອງປະຊຸມຄະນະບໍລິຫານງານສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ(APF)ທີ່ເມືອງປົດໂກຣິກາ (Podgorica), ປະເທດມົງເຕເນໂກຣ (Montenegro); ເຂົ້າຮ່ວມມີຄະນະຜູ້ແທນທີ່ເປັນສະມາຊິກຄະນະບໍລິຫານງານ APF ຈາກ 20 ປະເທດ ແລະ ເຂດແຄວ້ນ ເຊັ່ນ: ແບນຊິກ, ເບແນັງ, ກຳປູເຈຍ, ກາເມີຣູນ, ການາດາ, ກັບແວກ, ຝຣັ່ງ, ສປປລາວ, ລຸກຊຳບວກ, ມາຣົກ, ໂມຣິຕານີ, ໂມນາໂກ, ມົງເຕເນໂກຣ, ນູໂວ-ບຣຸນສວິກ, ນູແວນ-ເອໂກສ, ເກເບັກ, ສາທາລະນະລັດປະຊາທິປະໄຕ ກົງໂກ, ຣູມານີ, ເຊເນການ ແລະ ສະວິດ ເຊິ່ງປະກອບດ້ວຍປະທານ ແລະ ຄະນະເລຂາທິການໃຫຍ່ສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ, ພ້ອມທັງສະມາຊິກລັດຖະສະພາ ແລະ ເຈົ້າໜ້າທີ່ກ່ຽວຂ້ອງຈາກປະເທດເຈົ້າພາບ ລວມ 70 ກວ່າທ່ານ.

ກອງປະຊຸມໄດ້ພິຈາລະນາຮັບຮອງເອົາວາລະກອງປະຊຸມ, ອົງປະກອບຄະນະບໍລິຫານງານ, ສົນທະນາ ແລະ ຮັບຟັງບົດລາຍງານການເຄື່ອນໄຫວວຽກງານຂອງແຕ່ລະປະເທດ, ບົດລາຍງານການເຄື່ອນໄຫວວຽກງານຂອງຄະນະກຳມາທິການປະຈຳ ແລະ ເຄືອຂ່າຍສະມາຊິກລັດຖະສະພາເພດຍິງ, ລັດຖະສະພາໜຸ່ມ, ພິຈາລະນາຮັບຮອງເອົາໂຄງການຮ່ວມມືລັດຖະສະພາ ແລະ ຮ່າງແຜນງົບປະມານປະຈຳປີ 2026 ຂອງອົງການສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ, ພ້ອມທັງປຶກສາຫາລືແລະແລກປ່ຽນປະສົບການເຊິ່ງກັນແລະກັນໃນການປະຕິບັດໜ້າທີ່ວຽກງານຂອງຊະມາຊິກ APF; ພ້ອມກັນນີ້, ໄດ້ພິຈາລະນາຮັບຮອງລະບຽບການພາຍໃນຂອງ APF, ຕິດຕາມການຈັດຕັ້ງການປະຕິບັດແຜນຍຸດທະສາດ 2023-2030 ແລະ ປຶກສາຫາລືກ່ຽວກັບສະພາບການພົ້ນເດັ່ນຕ່າງໆໃນພາກພື້ນ ໂດຍສະເພາະໃນບັນດາປະເທດທີ່ໃຊ້ພາສາຝຣັ່ງ.

ຄະນະຜູ້ແທນສະພາແຫ່ງຊາດລາວ ໄດ້ຕາງໜ້າໃຫ້ພາກພື້ນອາຊີ-ປາຊີຟິກ ລາຍງານສະພາບການເຄື່ອນໄຫວຂອງບັນດາປະເທດສະມາຊິກສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ແລະ ສະເໜີຄຳເຫັນແລກປ່ຽນຄຳຄິດຄຳເຫັນຕໍ່ກອງປະຊຸມ ໂດຍທ່ານ ສັນຍາ ປຣະເສີດ ໄດ້ຍົກໃຫ້ເຫັນສະພາບການທາງດ້ານການເມືອງໃນພາກພື້ນແລະໃນໂລກ, ການພັດທະນາເສດຖະກິດ-ສັງຄົມ ຂອງ ສປປລາວ, ການເຄື່ອນໄຫວໃນປີ 2025 ຂອງສະພາແຫ່ງຊາດລາວ ໃນຂອບຂອງ APF ແລະ ການດຳເນີນນະໂຍບາຍການຕ່າງປະເທດສັນຕິພາບ, ເອກະລາດ, ມິດຕະພາບ ແລະ ການຮ່ວມມືອັນສະເໝີຕົ້ນສະເໝີປາຍ ຂອງ ສປປລາວ ໃນວົງຄະນະຍາດສາກົນ, ປະກອບສ່ວນຊຸກຍູ້ໃຫ້ມີການພົວພັນຮ່ວມມືເຊິ່ງກັນແລະກັນທັງໃນຂອບສອງຝ່າຍແລະຫຼາຍຝ່າຍລະຫວ່າງປະເທດສະມາຊິກຝຣັ່ງໂກໂຟນ ໃຫ້ຫຼາຍຂຶ້ນ ເພື່ອນຳເອົາຜົນປະໂຫຍດມາສູ່ປະຊາຊົນຂອງແຕ່ລະປະເທດ.

ກອງປະຊຸມຄະນະບໍລິຫານງານສະມັດຊາລັດຖະສະພາປະເທດທີ່ໃຊ້ພາສາຝຣັ່ງ ໄດ້ດຳເນີນໄປຕາມວາລະ ແລະ ໄດ້ຮັບຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ ໂດຍໄດ້ຮັບຮອງເອົາປະເທດກາເມີຣູນ ເປັນເຈົ້າພາບຈັດກອງປະຊຸມຄັ້ງຕໍ່ໄປ ໃນເດືອນກໍລະກົດ 2026.

# ໂຮງຮຽນ ຈິດຕິສັກ ຢ້ຽມຊົມຫ້ອງ ມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ ສພຊ



(ສພຊ) - ວັນທີ 3 ກຸມພາ2026 ກົມສື່ມວນຊົນຮ່ວມກັບຫ້ອງການຄຸ້ມຄອງຫໍສະພາແຫ່ງຊາດ (ສພຊ) ໄດ້ຕ້ອນຮັບ ແລະ ນຳພານັກຮຽນຈາກໂຮງຮຽນ ລ້ຽງເດັກ-ອະນຸບານ-ປະຖົມ ແລະ ມັດທະຍົມຕອນຕົ້ນ ຈິດຕິສັກ ຈຳນວນ 100 ຄົນ ເຊິ່ງນຳໂດຍທ່ານ ນາງ ດາລີວັນ ສີອັກຄະສອນ ຮອງອຳນວຍການໂຮງຮຽນ ທີ່ມາທັດສະນະສຶກສາຢ້ຽມຊົມຫ້ອງມູນເຊື້ອ ແລະ ຫ້ອງປະຊຸມໃຫຍ່ສະພາແຫ່ງຊາດ.

ການມາທັດສະນະສຶກສາຄັ້ງນີ້, ໄດ້ຮັບຟັງການບັນລະຍາຍໂດຍຫຍໍ້ເຫດການຕ່າງໆໃນປະຫວັດສາດ, ຢ້ຽມຊົມການວາງສະແດງວັດຖຸພັນຕ່າງໆ, ຊົມຮູບເງົາປະຫວັດຄວາມເປັນມາຂອງສະພາປະຊາຊົນສູງສຸດ ຊຸດທີ I ເຖິງສະພາແຫ່ງຊາດຊຸດປັດຈຸບັນ (ຊຸດທີ IX) ແລະ ນ້ອງນັກຮຽນໄດ້ຕອບຄຳຖາມເພື່ອຮັບປຶ້ມທີ່ລະນຶກຈາກ ສພຊ; ຈາກນັ້ນ, ຍັງໄດ້ຢ້ຽມຊົມຫ້ອງປະຊຸມໃຫຍ່ ເຮັດໃຫ້ນ້ອງໆນັກຮຽນ, ຄູ-ອາຈານ ມີຄວາມຮັບຮູ້ ແລະ ເຂົ້າ ໃຈກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງອົງການນິຕິບັນຍັດຫຼາຍຂຶ້ນ.

**(ນາງ ນິດຕາ ຄຸນປາກດີ)**

# ຜົນງານພົ້ນເດັ່ນຂອງສະພາແຫ່ງຊາດ ຊຸດທີ IX (2021-2025)




**ການເຄື່ອນໄຫວວຽກງານການຕ່າງປະເທດ**

ປີ 2024 ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບກຽດເປັນເຈົ້າພາບຈັດກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອປາ (AIPA) ຄັ້ງທີ 45 ທີ່ນະຄອນຫຼວງວຽງຈັນ ດ້ວຍຜົນສຳເລັດຢ່າງຈົບງາມ ໂດຍມີບັນດາປະເທດສະມາຊິກ, ປະເທດສັງເກດການ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງເຂົ້າຮ່ວມທັງໝົດ 27 ປະເທດ, ມີຄະນະຜູ້ແທນເຂົ້າຮ່ວມຫຼາຍກວ່າ 600 ທ່ານ ເຊິ່ງກອງປະຊຸມໄດ້ຄົ້ນຄວ້າພິຈາລະນາເນື້ອໃນຈຳນວນ 38 ຫົວຂໍ້ ແລະ ຮັບຮອງອອກເປັນມະຕິກອງປະຊຸມໄດ້ທັງໝົດ 37 ສະບັບ; ນອກຈາກນັ້ນ, ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງຊາດຍັງໄດ້ພົບປະສອງຝ່າຍກັບບັນດາປະເທດເພື່ອນມິດ, ຍຸດທະສາດ ແລະ ສາກົນ ທັງໝົດ 39 ຄະນະ. ພິເສດ, ກອງປະຊຸມຄັ້ງນີ້ ໄດ້ຮັບຮອງເອົາປະເທດບາເຣນ ແລະ ປະເທດເຢຍລະມັນ ເຂົ້າເປັນສະມາຊິກລັດຖະສະພາສັງເກດການໄອປາ. ການເປັນເຈົ້າພາບຈັດກອງປະຊຸມຄັ້ງນີ້ ເປັນໂອກາດໃນການສົ່ງເສີມນະໂຍບາຍຂອງປະເທດລາວທີ່ບໍ່ມີທາງອອກສູ່ທະເລ ໃຫ້ເປັນປະເທດເຊື່ອມໂຍງເຊື່ອມຈອດ, ສົ່ງເສີມການຮ່ວມມືກັບບັນດາລັດຖະສະພາສະມາຊິກໄອປາ ແລະ ຄູ່ຮ່ວມມືອື່ນໆ, ເປັນການຍົກສູງບົດບາດຂອງສະພາແຫ່ງຊາດລາວ ໃຫ້ສູງເດັ່ນຂຶ້ນໃນເວທີພາກພື້ນ ແລະ ສາກົນ;

ສະພາແຫ່ງຊາດ ເຄື່ອນໄຫວຢ້ຽມຢາມພົບປະແລະແລກປ່ຽນບົດຮຽນກັບບັນດາລັດຖະສະພາປະເທດເພື່ອນມິດຍຸດທະສາດ ແລະ ຕ່າງປະເທດ ໄດ້ຈຳນວນ 21 ຄະນະ; ເຂົ້າຮ່ວມກອງປະຊຸມອົງການລັດຖະສະພາພາກພື້ນ ແລະ ສາກົນ ຈຳນວນ 33 ຄັ້ງ; ເປັນເຈົ້າພາບຈັດກອງປະຊຸມລັດຖະສະພາພາກພື້ນ ຢູ່ ສປປລາວ ຈຳນວນ 7 ຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງລັດຖະສະພາຕ່າງປະເທດ, ຄະນະມິດຕະພາບລັດຖະສະພາ ລວມທັງທູຕານຸທູດ, ອົງການຈັດຕັ້ງສາກົນ ແລະ ແຂກຕ່າງປະເທດ ທີ່ເດີນທາງມາຢ້ຽມຢາມພົບປະ ແລະ ເຮັດວຽກຢູ່ ສປປລາວ ທັງໝົດ 47 ຄະນະ; ເຂົ້າຮ່ວມງານສະເຫຼີມສະຫຼອງວັນສຳຄັນຂອງຊາດ-ສາກົນ ຈຳນວນ 10 ຄັ້ງ.



## ປະທານ...

(ຕໍ່ຈາກໜ້າ 1)

ທາງມາຢ້ຽມຢາມລັດຖະກິດຢູ່ ສປປລາວ; ໃນໂອກາດດັ່ງກ່າວ, ສະຫາຍ ໄຊສົມພອນ ພົມວິຫານ ໄດ້ສະແດງຄວາມຍິນດີຕ້ອນຮັບຢ່າງອົບອຸ່ນແລະສະແດງຄວາມຊົມເຊີຍຕໍ່ສະຫາຍ ໂຕ ເລິມ ທີ່ໄດ້ຮັບເລືອກຕັ້ງໃຫ້ດຳລົງຕຳແໜ່ງເປັນເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກກອມມູນິດຫວຽດນາມ ອີກສະໄໝໜຶ່ງ ໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມພ້ອມທັງຕີລາຄາສູງຕໍ່ການເລືອກເອົາ ສປປລາວ ເປັນປະເທດທຳອິດໃນການເຄື່ອນໄຫວວຽກງານຕ່າງປະເທດຂອງສະຫາຍ ໂຕ ເລິມ ໃນຕຳແໜ່ງເລຂາທິການໃຫຍ່ພັກກອມມູນິດຫວຽດນາມ ແລະ ເປັນຄະນະຜູ້ແທນຂັ້ນສູງຂອງຕ່າງປະເທດຄະນະທຳອິດທີ່ມາຢ້ຽມຢາມ ສປປລາວ ໃນປີ 2026 ເຊິ່ງເປັນການສະແດງເຖິງຄວາມມີຊີວິດຊີວາແຫ່ງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານແລະຫຸ້ນສ່ວນຍຸດທະສາດ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນຂອງສອງປະເທດ.

ສອງຝ່າຍໄດ້ສະແດງຄວາມຊົມເຊີຍຕໍ່ບັນດາຜົນສຳເລັດໃນການພັດທະນາເສດຖະກິດ-ສັງຄົມທີ່ສອງປະເທດຍາດມາໄດ້ໃນໄລຍະຜ່ານມາ ກໍຄືຜົນສຳເລັດຂອງກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດຄັ້ງທີXIIຂອງພັກປະຊາຊົນປະຕິວັດລາວ ແລະ ກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XIV ຂອງພັກກອມມູນິດຫວຽດນາມ. ພ້ອມດຽວກັນນັ້ນ,ສອງຝ່າຍມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າເຖິງວ່າສະພາບການພາກພື້ນແລະສາກົນ ໄດ້ມີການຜັນແປໄປຢ່າງໄວວາ ແລະ ສັບສົນ ກໍຕາມ, ແຕ່ສາຍພົວພັນຂອງສອງປະເທດສືບຕໍ່ໄດ້ຮັບການເພີ່ມພູນຄູນສ້າງ ແລະ ໄດ້ຍົກລະດັບເປັນສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານແລະຫຸ້ນສ່ວນຍຸດທະສາດ; ສອງຝ່າຍໄດ້ຕີລາຄາສູງຕໍ່ການພົວພັນຮ່ວມມືລະຫວ່າງສອງສະພາແຫ່ງຊາດລາວ-ຫວຽດນາມໃນໄລຍະຜ່ານມາ ເຊິ່ງສອງຝ່າຍໄດ້ສຳເລັດການຂຽນ ແລະ ການເປີດນຳໃຊ້ປຶ້ມ "50 ປີ ແຫ່ງການພົ ພັນລະຫວ່າງສະພາແຫ່ງຊາດລາວແລະສະພາແຫ່ງຊາດຫວຽດນາມ: ການຮ່ວມມືຮອບດ້ານ ແລະ ການພັດທະນາ" ໃນຕົ້ນເດືອນທັນວາ 2025 ທີ່ຜ່ານມາ.

ໃນໂອກາດນີ້, ສະຫາຍ ໄຊສົມພອນພົມວິຫານ ໄດ້ແຈ້ງໃຫ້ສະຫາຍ ໂຕ ເລິມ ຊາບໂດຍຫຍໍ້ກ່ຽວກັບຜົນການພົບປະສອງຝ່າຍກັບສະຫາຍ ເຈິ່ນ ແທັງເໝິນ ປະທານສະພາແຫ່ງຊາດແຫ່ງ ສສ.ຫວຽດນາມ ເຊິ່ງສອງຝ່າຍໄດ້ຕີລາຄາຄືນການພົວພັນຮ່ວມມືໃນໄລຍະຜ່ານມາລວມທັງການວາງທິດທາງແຜນການຮ່ວມມືໃນຕໍ່ໜ້າ ໂດຍຈະສືບຕໍ່ແລກປ່ຽນການຢ້ຽມຢາມຂອງການນຳຂັ້ນສູງ ແລະ ຂັ້ນຕ່າງໆທັງສູນກາງ ແລະ ທ້ອງຖິ່ນນຳກັນ, ຮ່ວມກັນຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນດ້ານຕ່າງໆຮ່ວມກັນ; ປະທານສະພາແຫ່ງຊາດລາວ ໄດ້ສະແດງຄວາມຂອບໃຈ ແລະ ຮູ້ບຸນຄຸນເປັນຢ່າງສູງຕໍ່ພັກ, ລັດ ແລະ ປະຊາຊົນຫວຽດນາມອ້າຍນ້ອງ ທີ່ໄດ້ໃຫ້ການສະໜັບສະໜູນ ແລະ ຊ່ວຍເຫຼືອອັນໃຫຍ່ຫຼວງທີ່ລ້ຳຄ່າ, ທັນການ ແລະ ມີປະສິດທິຜົນ ໃຫ້ແກ່ພັກ, ລັດ ແລະ ປະຊາຊົນລາວບັນດາເຜົ່າ ບໍ່ວ່າຈະໃນໄລຍະຕໍ່ສູ້ເພື່ອຍາດເອົາເອກະລາດແຫ່ງຊາດ ກໍຄືໃນໄລຍະແຫ່ງການປົກປັກຮັກສາ ແລະ ສ້າງສາປະເທດ ໃນປັດຈຸບັນ ໂດຍສະເພາະການຊ່ວຍເຫຼືອຂອງສະພາແຫ່ງຊາດຫວຽດນາມທີ່ມີຕໍ່ສະພາແຫ່ງຊາດລາວຕະຫຼອດມາ. ສະຫາຍ ໄຊສົມພອນ ພົມວິຫານ ຍັງໄດ້ແຈ້ງໃຫ້ສະຫາຍເລຂາທິການໃຫຍ່ ພ້ອມດ້ວຍຄະນະກ່ຽວກັບສະພາແຫ່ງຊາດລາວພວມຊຸ້ມຂ້ຽວກະກຽມໃສ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ໃນທົ່ວປະເທດ ເຊິ່ງຈະມີຂຶ້ນໃນວັນທີ 22 ກຸມພາທີ່ຈະມາເຖິງນີ້.

ໂອກາດນີ້, ສະຫາຍ ໂຕ ເລິມ ກໍໄດ້ສະແດງຄວາມຂອບໃຈຕໍ່ການຕ້ອນຮັບຢ່າງອົບອຸ່ນ ແລະ ສະໜິດສະໜົມຂອງສະຫາຍ ໄຊສົມພອນ ພົມວິຫານ ພ້ອມທັງມີຄຳເຫັນຊີ້ນຳໃຫ້ສອງສະພາແຫ່ງຊາດ ຫວຽດນາມ ແລະ ລາວ ສືບຕໍ່ຊຸກຍູ້ລັດຖະບານຂອງສອງປະເທດ ຈັດຕັ້ງປະຕິບັດບັນດາສົນທິສັນຍາ, ສັນຍາ ແລະ ຂໍ້ຕົກລົງ, ບັນດາໂຄງການຮ່ວມມື ທີ່ສອງຝ່າຍໄດ້ລົງນາມຮ່ວມກັນ ເພື່ອສົ່ງເສີມການພົວພັນຮ່ວມມືທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນລະຫວ່າງສອງປະເທດ ໃຫ້ຂະຫຍາຍຕົວສູງຂຶ້ນ ສົມຄູ່ກັບການພົວພັນຮ່ວມມືດ້ານການເມືອງລະຫວ່າງສອງປະເທດ.



## ສ້າງຄວາມໝັ້ນໃຈ...

(ຕໍ່ຈາກໜ້າ 1)

ພາແຫ່ງຊາດເພດຍິງ ຊຸດທີ IX, ກຳມະການອະນຸກຳມະການໂຄງປະກອບ ແລະ ບຸກຄະລາກອນ, ໂດຍການເຂົ້າຮ່ວມຂອງທ່ານ ປອ. ນາງ ສູນທອນ ໄຊຍະຈັກ ເລຂາທິການສູນກາງພັກ, ຮອງປະທານສະພາແຫ່ງຊາດ, ຜູ້ປະຈຳການຄະນະກຳມະການເລືອກຕັ້ງລະດັບຊາດ, ມີບັນດາທ່ານຜູ້ສະໝັກຮັບເລືອກຕັ້ງເປັນສສຊ ແລະ ສສຂ ທີ່ເປັນເພດຍິງ ຈາກ 10ແຂວງຄື: ນະຄອນຫຼວງວຽງຈັນ, ຜົ້ງສາລີ, ຫຼວງນ້ຳທາ, ອຸດົມໄຊ, ບໍ່ແກ້ວ, ຫຼວງພະບາງ, ໄຊຍະບູລີ, ຫົວພັນ, ວຽງຈັນ ແລະ ໄຊສົມບູນ ລວມ 200 ກວ່າທ່ານ.

ທ່ານ ນາງ ທຸມມາລີ ວົງພະຈັນ ໄດ້ມີຄຳເຫັນວ່າ: ຈຸດປະສົງໃນການຈັດກອງປະຊຸມຄັ້ງນີ້ ກໍເພື່ອຍົກລະດັບຄວາມຮັບຮູ້ກ່ຽວກັບທີ່ຕັ້ງ, ພາລະບົດບາດ, ສິດແລະໜ້າທີ່ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຂອງ ສປປລາວ, ຄວາມໝາຍ, ຄວາມສຳຄັນ, ຈຸດປະສົງລະດັບຄາດໝາຍຂອງການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V; ສ້າງຄວາມເຂັ້ມແຂງດ້ານທັກສະການໂຄສະນາຫາສຽງ ໃຫ້ແກ່ຜູ້ລົງສະໝັກຮັບເລືອກຕັ້ງເປັນສະມາຊິກສະພາທີ່ເປັນເພດຍິງ; ສ້າງຄວາມຮູ້ພື້ນຖານກ່ຽວກັບມາລະຍາດທາງສັງຄົມ, ທັກສະການເວົ້າ, ພາສາກາຍ, ມາລະຍາດ ແລະ ການນຸ່ງຖື ໃນການລົງພົບປະປະຊາຊົນຜູ້ມີສິດເລືອກຕັ້ງ; ວິທີສ້າງຄວາມໝັ້ນໃຈໃນການໃຫ້ສຳພາດຕໍ່ສື່ມວນຊົນ. ຈາກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ມີການເຝິກປະຕິບັດຕົວຈິງ ເພື່ອສ້າງຄວາມໝັ້ນໃຈແລະເປັນຄວາມຮູ້ພື້ນຖານໃຫ້ຜູ້ສະໝັກຮັບເລືອກຕັ້ງມີຄວາມພ້ອມໃນການລົງສູ່ສະໜາມເລືອກຕັ້ງ.

ກອງປະຊຸມໄດ້ຮັບຟັງທິດຊີ້ນຳຈາກທ່ານ ປອ. ນາງ ສູນທອນ ໄຊຍະຈັກ ກ່ຽວກັບວຽກງານເລືອກຕັ້ງ ສສຊ ຊຸດທີ X ແລະ ສສຂ ຊຸດທີ V ໂດຍສະເພາະແມ່ນໄດ້ເຜີຍແຜ່ເນື້ອໃນມະຕິຂອງກົມການເມືອງສູນກາງພັກ ສະບັບເລກທີ 26/ກມສພ, ລົງວັນທີ 12 ກັນຍາ 2025 ກ່ຽວກັບການເພີ່ມທະວີການນຳພາ-ຊີ້ນຳຂອງອົງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີV; ຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດ ສະບັບເລກທີ16/ຄລຊ, ລົງວັນທີ 12 ມັງກອນ 2026 ກ່ຽວກັບການໂຄສະນາ, ພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V. ພ້ອມນີ້, ທ່ານຍັງໄດ້ເນັ້ນໜັກໃຫ້ຜູ້ເຂົ້າຮ່ວມກອງປະຊຸມຮັບຮູ້ ແລະ ເຂົ້າໃຈເຖິງຄວາມໝາຍຄວາມສຳຄັນຂອງການເລືອກຕັ້ງ ກໍຄືການປະກອບສ່ວນຂອງເອື້ອຍນ້ອງແມ່ຍິງໃນເວທີການເມືອງ ພ້ອມທັງຮຽກຮ້ອງໃຫ້ຜູ້ເຂົ້າຮ່ວມ ຈົ່ງສຸມສະຕິປັນຍາເຂົ້າໃນການຄົ້ນຄວ້າ ແລະ ເຝິກປະຕິບັດຕົວຈິງ ໃຫ້ສາມາດນຳເອົາບົດຮຽນຈາກກອງປະຊຸມເຝິກອົບຮົມຄັ້ງນີ້ ໄປໝູນໃຊ້ເຂົ້າໃນການລົງສະໝັກຮັບເລືອກຕັ້ງເປັນ ສສຊ ແລະ ສສຂ ແນໃສ່ເຮັດໃຫ້ການເລືອກຕັ້ງຄັ້ງນີ້ ສາມາດເລືອກໄດ້ ສສຊ ແລະ ສສຂ ເພດຍິງ ບັນລຸ 30% ຂຶ້ນໄປຕາມລະດັບຄາດໝາຍທີ່ວາງໄວ້.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກແຜນງານເຊກ້າ ໄລຍະທີ II (CEGGA-phase II) ໂດຍຜ່ານອົງການເຮວວີຕັສ (Helvetas).

**(ກົງທະນູຄຳ ພິພັດເສລີ)**

# ສພຂ ຄໍາມ່ວນ ຮັບຮອງ 8 ມະຕິ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ IV ໄດ້ດໍາເນີນຂຶ້ນໃນວັນທີ 24-26 ທັນວາຜ່ານມາ ທີ່ສະໂມສອນໃຫຍ່ 21 ມີນາ, ພາຍໃຕ້ການເປັນປະທານຂອງທ່ານ ບຸນມີ ພິມມະສອນ ປະທານສະພາປະຊາຊົນແຂວງຄໍາມ່ວນ; ເຂົ້າຮ່ວມມີທ່ານ ວັນໄຊ ພອງສະຫວັນ ກໍາມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງຄໍາມ່ວນ; ມີບັນດາການນໍາພັກ-ລັດ, ການນໍາອາວຸໂສ-ບໍານານ; ສະມາຊິກສະພາແຫ່ງຊາດ (ສສຊ) ປະຈໍາເຂດເລືອກຕັ້ງທີ 12, ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ); ປະທານ-ຮອງປະທານຄະນະກໍາມະການປົກຄອງແຂວງ; ກໍາມະການຄະນະກໍາມະການປົກຄອງແຂວງ; ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນແຂວງ ແລະ ແຂກທີ່ຖືກເຊີນເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ ໄດ້ພິຈາລະນາ ແລະ ຮັບຮອງເອົາບັນຫາສໍາຄັນພື້ນຖານຂອງແຂວງ ໂດຍໄດ້ອອກເປັນມະຕິ 8 ສະບັບ ຄື: 1) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງປະທານຄະນະກໍາມະການປົກຄອງແຂວງຄໍາມ່ວນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ໄລຍະ 5 ປີ (2021-2025), ປະຈໍາປີ 2025ແລະແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ ປະຈໍາປີ 2026; 2) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງປະທານຄະນະກໍາມະການປົກຄອງແຂວງຄໍາມ່ວນ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂອງແຂວງໄລຍະ 5 ປີ (2021-2025), ປະຈໍາປີ 2025 ແລະ ແຜນງົບປະມານແຫ່ງລັດ ຂອງແຂວງປະຈໍາປີ 2026; 3) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງປະທານຄະນະກໍາມະການປົກຄອງແຂວງຄໍາມ່ວນ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງແຂວງ ໄລຍະ 5 ປີ (2021-2025), ປະຈໍາປີ 2025 ແລະ ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກ ຂອງແຂວງ ປະຈໍາປີ 2026; 4) ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ໄລຍະ5ປີ(2021-2025), ປະຈໍາປີ 2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈໍາປີ 2026, ບົດລາຍງານຜົນກວດສອບບົດສະຫຼຸບຂາດຕົວ ຕໍ່ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈໍາປີ 2024 ຂອງອົງການກວດສອບປະຈໍາພາກພາງ 2; 5) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈໍາປີ 2025 ແລະ ແຜນການເຄື່ອນໄຫວວຽກງານປະຈໍາປີ 2026, ບົດລາຍງານຜົນການກວດກາຕາມຜົນການກວດສອບ ປະຈໍາປີ 2023 ຂອງອົງການກວດກາລັດແຂວງ; 6) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈໍາປີ 2025 ແລະ ແຜນການເຄື່ອນໄຫວວຽກງານປະຈໍາປີ2026ຂອງອົງການໄອຍະການປະຊາຊົນແຂວງ;7)ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງສານປະຊາຊົນແຂວງ ກ່ຽວກັບການເຄື່ອນໄຫວວຽກງານ5ປີ(2021-2025), ປະຈໍາປີ 2025 ແລະ ແຜນການເຄື່ອນໄຫວວຽກງານປະຈໍາປີ 2026 ແລະ 8) ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈໍາປີ2025 ຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ IV ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງຄໍາມ່ວນ ຊຸດທີ V; ພ້ອມນັ້ນ, ຍັງໄດ້ຈັດພິທີມອບໃບຍ້ອງຍໍການສໍາເລັດໜ້າທີ່ ຂອງ ສສຂ ຄໍາມ່ວນ ຊຸດທີ IV ໃຫ້ແກ່ ສສຂ.




# ພະນັກງານຫຼັກແຫຼ່ງແຂວງຄໍາມ່ວນ ເຊື່ອມຊຶມວຽກງານເລືອກຕັ້ງ



(ສພຂ) - ວັນທີ 30 ທັນວາຜ່ານມາ ທີ່ສະໂມສອນໃຫ່ຍແຂວງຄໍາມ່ວນ, ໄດ້ດໍາເນີນກອງປະຊຸມເຜີຍແຜ່ເຊື່ອມຊຶມ ແລະ ຜັນຂະຫຍາຍ ວຽກງານເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ (ສສຂ) ຊຸດທີ V ໃຫ້ແກ່ພະນັກງານຫຼັກແຫຼ່ງຂັ້ນແຂວງ ແລະ ຂັ້ນເມືອງ ໃນວຽກງານການເລືອກຕັ້ງ ສສຊ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ (ສພຂ) ຊຸດທີ V ໂດຍການເປັນປະທານຂອງທ່ານ ວັນໄຊ ພອງສະຫວັນ ກໍາມະການສູນກາງພັກ, ເລຂາຄະນະບໍລິງານພັກແຂວງ, ປະທານຄະນະກໍາມະການເລືອກຕັ້ງຂັ້ນແຂວງ; ມີບັນດາທ່ານຄະນະກໍາມະການເລືອກຕັ້ງຂັ້ນແຂວງ, ຄະນະບໍລິຫານງານພັກແຂວງ, ຄະນະປະຈໍາສະພາປະຊາຊົນຂັ້ນແຂວງ, ຄະນະກໍາມະການເລືອກຕັ້ງຂັ້ນເມືອງ, ຄະນະພັກຮາກຖານ, ຄະນະໜ່ວຍພັກ, ອົງການທຽບເທົ່າ ແລະ ແຂກຖືກເຊີນເຂົ້າຮ່ວມ 546 ທ່ານ.

ທ່ານ ວັນໄຊ ພອງສະຫວັນ ກ່າວວ່າ: ກອງປະຊຸມຄັ້ງນີ້, ເພື່ອເຮັດໃຫ້ການກະກຽມແລະດໍາເນີນການເລືອກຕັ້ງສສຊ ຊຸດທີ X ແລະ ສພຂ ຊຸດທີ V ຖືກຕ້ອງຕາມເນື້ອໃນ, ຈິດໃຈຂອງກົມການເມືອງສູນກາງພັກ ກ່ຽວກັບການເລືອກຕັ້ງ ສສຊ ແລະ ສສຂ ສອດຄ່ອງ ຕາມກົດໝາຍກໍານົດໄວ້ ທັງເຊື່ອມຊຶມບັນດາເອກະສານ ກ່ຽວກັບການເລືອກຕັ້ງ, ຄໍາແນະນໍາການກະກຽມ ແລະ ດໍາເນີນການເລືອກຕັ້ງ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ມີຄວາມເປັນເອກະພາບແຕ່ຂັ້ນແຂວງ-ຂັ້ນເມືອງ ແລະ ສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມການເສີມຂະຫຍາຍຈິດໃຈຮັກຊາດ, ສິດປະຊາທິປະໄຕໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງຊາດ, ມີສະຕິລະວັງຕົວ, ເປັນເຈົ້າການຕອບຕ້ານກົນອຸບາຍ ແລະ ການທໍາລາຍຂອງພວກປໍລະປັກທີ່ຫວັງມ້າງເພທໍາລາຍລະບອບໃໝ່ຂອງພວກເຮົາ.

ກອງປະຊຸມໄດ້ເຊື່ອມຊຶມການຜັນຂະຫຍາຍມະຕິກົມການເມືອງສູນກາງພັກກ່ຽວກັບການເພີ່ມທະວີນໍາພາ-ຊີ້ນໍາຂອງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີ V; ເນື້ອໃນສໍາຄັນຂອງກົດໝາຍ ວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V; ການເພີ່ມທະວີການນໍາພາແນວຄິດ ແລະ ເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV; ເຊື່ອມຊຶມແລະຈັດຕັ້ງປະຕິບັດແຜນດໍາເນີນງານຂອງຄະນະກໍາມະການເລືອກຕັ້ງຂັ້ນແຂວງ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງຊຸດທີV; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າ, ເຊື່ອມຊຶມ ແລະ ປະກອບຄວາມເຫັນຕໍ່ແຕ່ລະເນື້ອໃນ ເພື່ອຄວາມເຂົ້າໃຈເປັນເອກະພາບແລະເປັນບ່ອນອີງໃນການຈັດຕັ້ງປະຕິບັດໃຫ້ມີຜົນສໍາເລັດ.

# ກອງປະຊຸມຮ່ວມລະຫວ່າງຄະນະກໍາມະການປົກຄອງ ກັບ ຄະນະປະຈໍາສະພາປະຊາຊົນ




(ສພຂ) - ກອງປະຊຸມຮ່ວມ ລະຫວ່າງ ຄະນະກໍາມະການປົກຄອງແຂວງ ກັບ ຄະນະປະຈໍາສະພາປະຊາຊົນແຂວງດໍາເນີນໃນວັນທີ 22 ທັນວາຜ່ານມາ ທີ່ສະໂມສອນໃຫຍ່ຫ້ອງວ່າການແຂວງ ພາຍໃຕ້ການເປັນປະທານຮ່ວມຂອງ ທ່ານ ປອ. ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງ ແລະ ທ່ານ ບຸນທະວີ ນະຄອນສິດ ຄະນະປະຈໍາພັກແຂວງ, ຮອງປະທານຄະນະກໍາມະການປົກຄອງແຂວງ; ມີຄະນະປະຈໍາພັກແຂວງ, ຄະນະປະຈໍາສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ ແລະ ພະແນກການທີ່ກ່ຽວຂ້ອງເຂົ້າຮ່ວມ.

ຈຸດປະສົງເພື່ອປຶກສາຫາລື,ແລກປ່ຽນຄໍາຄິດເຫັນ ໃຫ້ມີຄວາມເປັນເອກະພາບຕໍ່ບັນດາເນື້ອໃນຕ່າງໆ ຂອງຄະນະກໍາມະການປົກຄອງແຂວງ ທີ່ຈະນໍາເຂົ້າພິຈາລະນາ ໃນກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ຊຸດທີ IV ທັງປຶກສາຫາລືສຸມໃຊ້ສະຕິປັນຍາ ເພື່ອເປັນເອກະພາບແລະເປັນບ່ອນອີງໃນການແກ້ໄຂບັນຫາຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ປາກົດການຫຍໍ້ທໍ້ຕ່າງໆແລະພ້ອມກັນຕີລາຄາ ແລະ ຖອດຖອນບົດຮຽນກ່ຽວກັບກົນໄກການປະສານງານ ລະຫວ່າງຄະນະກໍາມະການປົກຄອງແຂວງກັບສພຂ.

**(ສຸກກະສັນ)**

# ສພຂ ສາລະວັນ ສຳເລັດການດຳເນີນ ກອງປະຊຸມສະໄໝສາມັນເທື່ອທີ 10



(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ສາລະວັນ ຊຸດທີ IV ໄດ້ດຳເນີນຂຶ້ນໃນວັນທີ 19 ທັນວາຜ່ານມາ ທີ່ສະໂມສອນແຂວງສາລະວັນ ໂດຍການເປັນປະທານຂອງທ່ານ ສີເຮັງ ທອມສິມບັດ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ສຸບັນ ສະວະບຸດ ຄະນະປະຈຳສະພາແຫ່ງຊາດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງ 14; ທ່ານ ປະເດີມພອນ ສິນທະນີ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ມີບັນດາການນຳຂັ້ນສູງຂອງແຂວງ, ອາດີດການນຳຂັ້ນສູງພັກ-ລັດ ຂັ້ນແຂວງ, ບັນດາທ່ານ ສສຊ ປະຈຳເຂດເລືອກຕັ້ງ 14, ສະມາຊິກສະພາປະຊາຊົນແຂວງ (ສສຂ), ຄະນະນຳພະແນກການ, ອົງການລັດທຽບເທົ່າຂັ້ນແຂວງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຮັບຮອງເອົາເປັນມະຕິກອງປະຊຸມ ຈຳນວນ 8 ສະບັບ ຄື ມະຕິ ວ່າດ້ວຍ ການຮັບຮອງເອົາບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຂອງແຂວງ 5 ປີ 2021-2025, ປະຈຳປີ 2025 ແລະ ແຜນການປະຈຳປີ 2026; ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ 2021-2025 ແລະ ທິດທາງຕໍ່ໜ້າ ຢູ່ແຂວງສາລະວັນ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍ: ການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ 2021-2025 ແລະ ທິດທາງຕໍ່ໜ້າ ຢູ່ແຂວງສາລະວັນ; ມະຕິວ່າດ້ວຍການຮັບຮອງເອົາ ບົດລາຍງານກ່ຽວກັບ ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ແຜນການປະຈຳປີ 2026; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ຂອງອົງການກວດສອບປະຈຳພາກໃຕ້; ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ແຜນການ ປະຈຳປີ2026; ບົດລາຍງານຜົນການກວດກາ ຕາມຜົນການກວດສອບ ປີ 2023 ຂອງອົງການກວດກາລັດແຂວງ; ມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ແຜນການ ປະຈຳປີ 2026 ຂອງສານປະຊາຊົນແຂວງ; ມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ແຜນການ ປະຈຳປີ2026 ອົງການໄອຍະການປະຊາຊົນແຂວງແລະມະຕິວ່າດ້ວຍການຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ 2021-2025, ປະຈຳປີ 2025 ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກຂອງສະພາປະຊາຊົນແຂວງ ຊຸດທີ V.

**(ສະພາປະຊາຊົນແຂວງ)**

# ສພຂ ຈຳປາສັກ ຮັບຮອງມະຕິ 10 ສະບັບ




(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ຈຳປາສັກ ຊຸດທີ IV ໄດ້ດຳເນີນໃນວັນທີ18-19ທັນວາ2025 ຢູ່ທີ່ຫໍປະຊຸມໃຫຍ່ຂອງແຂວງຈຳປາສັກ (ສະໂມສອນຫຼັກ 4) ພາຍໃຕ້ການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງຈຳປາສັກ; ເຂົ້າຮ່ວມມີທ່ານ ປອ. ອາລຸນໄຊ ສູນນະລາດ ກຳມະການສູນກາງພັກ, ເລຂາຄະນະບໍລິຫານງານພັກແຂວງຈຳປາສັກ; ທ່ານ ປອ. ສຸກສະຫວັນ ວິໄລວົງ ຮອງເລຂາພັກແຂວງ, ປະທານຄະນະກຳມະການປົກຄອງແຂວງຈຳປາສັກ; ມີຄະນະປະຈຳສະພາປະຊາຊົນແຂວງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ປະຈຳເຂດເລືອກຕັ້ງ 9 ເມືອງ 1 ນະຄອນ, ຮອງປະທານຄະນະກຳມະການປົກຄອງແຂວງ, ຄະນະກຳມະການປົກຄອງແຂວງ, ພະແນກການ-ກົມກອງ-ອົງການທຽບເທົ່າ ອ້ອມຂ້າງແຂວງ, ພະນັກງານອາວຸໂສບຳນານ, ພະນັກງານ-ລັດຖະກອນ, ນັກຮຽນຮູ້ປັນຍາຊົນ ເຂົ້າຮ່ວມຢ່າງພ້ອມພຽງ.

ກອງປະຊຸມ ໄດ້ພິຈາລະນາຮັບຮອງເປັນມະຕິຂອງກອງປະຊຸມ 10 ສະບັບ ຄື:1) ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງຈຳປາສັກ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ (2021-2025), ປະຈຳປີ 2025 ແລະ ແຜນພັດທະນາເສດຖະກິດ-ສັງຄົມ ປະຈຳປີ 2026 ຂອງແຂວງຈຳປາສັກ; 2) ຮັບຮອງເອົາບົດລາຍງານຂອງອົງການປົກຄອງແຂວງຈຳປາສັກ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານ 5 ປີ (2021-2025), ປະຈຳປີ2025 ແລະ ແຜນງົບປະມານປະຈຳປີ 2026 ຂອງແຂວງຈຳປາສັກ; 3) ຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດວາລະຂອງແຂວງ ຕາມເນື້ອໃນວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໃນໄລຍະ 5 ປີ (2021-2025)ແລະທິດທາງແຜນການໃນຕໍ່ໜ້າ; 4) ຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດວາລະຂອງແຂວງ ຕາມເນື້ອໃນວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະ 5 ປີ (2021-2025) ແລະ ທິດທາງແຜນການໃນຕໍ່ໜ້າ; 5) ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ5ປີ(2021-2025), ປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງອົງການກວດສອບປະຈຳພາກໃຕ້; 6) ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025) ປະຈຳ ປີ 2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງອົງການກວດກາລັດແຂວງ; 7) ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳ ປີ 2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງອົງການໄອຍະການປະຊາຊົນພາກໃຕ້ ແລະ ອົງການໄອຍະການປະຊາຊົນແຂວງຈຳປາສັກ; 8) ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປີ 2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງສານປະຊາຊົນພາກໃຕ້ແລະສານປະຊາຊົນແຂວງຈຳປາສັກ; 9) ຮັບຮອງເອົາ ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 5 ປີ (2021-2025), ປະຈຳປີ2025 ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ IV ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກ ຂອງສະພາປະຊາຊົນແຂວງຈຳປາສັກ ຊຸດທີ V; 10) ຮັບຮອງເອົາການສ້າງຕັ້ງຕາແສງຂອງແຂວງຈຳປາສັກ.

ພ້ອມນັ້ນ, ກອງປະຊຸມຍັງສະເໜີໃຫ້ອົງການປົກຄອງແຂວງ ແລະ ພະແນກການທີ່ກ່ຽວຂ້ອງເອົາໃຈໃສ່ສືບຕໍ່ແກ້ໄຂບັນຫາ ການເອົາເນື້ອທີ່ດິນລັດໃຫ້ເຊົ່າ-ສຳປະທານ ແລະ ວຽກງານການຈັດເກັບລາຍຮັບອາກອນທີ່ດິນ 9 ເມືອງ ແລະ ນະຄອນ ຂອງແຂວງຈຳປາສັກ.

# ເຝິກອົບຮົມວຽກງານເລືອກຕັ້ງ ໃຫ້ພະນັກງານ ຫຼັກແຫຼ່ງຂັ້ນທ້ອງຖິ່ນຂອງແຂວງຈຳປາສັກ




(ສພຂ) - ວັນທີ 25 ທັນວາຜ່ານມາ ທີ່ຫ້ອງປະຊຸມສະໂມສອນໃຫຍ່ຂອງເມືອງໂພນທອງ, ຄະນະກຳມະການເລືອກຕັ້ງຂັ້ນແຂວງ ແຂວງຈຳປາສັກ ໄດ້ຈັດກອງປະຊຸມເຝິກອົບຮົມໃຫ້ແກ່ພະນັກງານຫຼັກແຫຼ່ງຂັ້ນທ້ອງຖິ່ນ 9 ເມືອງ, 1 ນະຄອນຂອງແຂວງຈຳປາສັກເພື່ອຮັບໃຊ້ການເລືອກຕັ້ງສະມາຊິກສະພາແຫ່ງຊາດ (ສສຊ) ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ(ສພຂ)ຊຸດທີV ໂດຍການເປັນປະທານຂອງທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງ, ຮອງປະທານຄະນະກຳມະການເລືອກຕັ້ງຂັ້ນແຂວງ, ຫົວໜ້າຄະນະປະຈຳການຄະນະກຳມະການເລືອກຕັ້ງຂັ້ນແຂວງ; ມີກຳມະການ, ຄະນະບໍລິຫານງານພັກ, ຫົວໜ້າຄະນະຈັດຕັ້ງ, ຫົວໜ້າຄະນະໂຄສະນາອົບຮົມ, ປະທານແນວລາວສ້າງຊາດ, ປະທານອົງການກວດກາພັກ-ລັດ, ຫົວໜ້າຫ້ອງວ່າການປົກຄອງ 9 ເມືອງ 1 ນະຄອນ ເຂົ້າຮ່ວມຫຼາຍກວ່າ 174 ທ່ານ.

ທ່ານ ສາຍທອງ ໄຊຍະວົງ ກ່າວວ່າ: ການເຝິກອົບຮົມຄັ້ງນີ້ເພື່ອເຮັດໃຫ້ການກະກຽມ ແລະ ດຳເນີນການເລືອກຕັ້ງ ສສຊ ຊຸດທີ X ແລະ ສພຂ ຊຸດທີV ຖືກຕ້ອງຕາມເນື້ອໃນ, ຈິດໃຈຂອງມະຕິກົມການເມືອງສູນກາງພັກວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ສອດຄ່ອງຕາມກົດໝາຍກຳນົດໄວ້; ເພື່ອເຊື່ອມຊຶມບັນດາເອກະສານກ່ຽວກັບການເລືອກຕັ້ງ, ແນະນຳການກະກຽມ ແລະ ດຳເນີນການເລືອກຕັ້ງ ໃຫ້ຖືກຕ້ອງຕາມກົດໝາຍ, ແລະ ມີຄວາມເປັນເອກະພາບແຕ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ; ເພື່ອສຶກສາອົບຮົມການເມືອງ-ແນວຄິດ ແລະ ປຸກລະດົມການເສີມຂະຫຍາຍຈິດໃຈຮັກຊາດສິດປະຊາທິປະໄຕໃນການເລືອກຕັ້ງ, ຍົກສູງສະຕິຊາດ, ມີຄວາມເປັນເອກະພາບ ແລະ ຄວາມສາມັກຄີປອງດອງ, ມີສະຕິລະວັງຕົວ, ເປັນເຈົ້າການຕອບຕ້ານກົນອຸບາຍ ແລະ ການທຳລາຍຂອງພວກປໍລະປັກ ທີ່ຫວັງມ້າງເພທຳລາຍລະບອບໃໝ່ຂອງພວກເຮົາ.

ກອງປະຊຸມໄດ້ເຊື່ອມຊຶມ ແລະ ຜັນຂະຫຍາຍມະຕິກົມການເມືອງສູນກາງພັກວ່າດ້ວຍການເພີ່ມທະວີນຳພາ-ຊີ້ນຳຂອງຄະນະພັກທຸກຂັ້ນຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີX ແລະ ສະພາປະຊາຊົນຂັ້ນແຂວງ

ອ່ານຕໍ່ໜ້າ 12

# ກອງປະຊຸມຄົບຄະນະ ປະຈຳປີ 2025 ຂອງ ຄະນະກຳມະການພາຍໃນ ສພຂ ຈຳປາສັກ




(ສພຂ) - ວັນທີ 15 ທັນວາຜ່ານມາ, ຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ(ປກຊ-ປກສ) ສະພາປະຊາຊົນແຂວງຈຳປາສັກ ໄດ້ເປີດກອງປະຊຸມຄົບຄະນະ ປະຈຳປີ 2025 ໂດຍການເປັນປະທານຂອງທ່ານ ປອ. ສົມໄຊ ສີຫາຈັກ ກຳມະການຄະນະປະຈຳ, ປະທານຄະນະກຳມະການຍຸຕິທຳ ແລະ ປກກຊ-ປກສ; ມີບັນດາຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງທີ່ສັງກັດໃນຄະນະກຳມະການ, ຫົວໜ້າ-ຮອງຫົວໜ້າ ພະແນການກົມກອງໃນຂົງເຂດຍຸຕິທຳ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ໃນກອງປະຊຸມທ່ານນາງ ເຂັມຄຳ ກິດຕິພັນ ຮອງປະທານຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ໄດ້ລາຍງານການຈັດຕັ້ງປະຕິບັດແຜນການ 5 ປີ (2021-2025),ປະຈຳປີ2025 ແລະ ທິດທາງວຽກງານປີ 2026 ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ເຊິ່ງທ່ານໃຫ້ຮູ້ວ່າ: ໄລຍະ 5 ປີ ໄດ້ຮັບຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ 155 ເລື່ອງ, ໃນນັ້ນ: ຄ້າງມາແຕ່ຊຸດທີ III ມີ 5 ເລື່ອງ, ເຂົ້າໃໝ່ 150 ເລື່ອງ, ແກ້ໄຂສຳເລັດ ໃນປີ 2025 ຈຳນວນ 153 ເລື່ອງ ເທົ່າກັບ 97%, ຍັງສືບຕໍ່ຄົ້ນຄວ້າຕິດຕາມກວດກາ 2 ເລື່ອງ; ຮັບຕ້ອນພົນລະເມືອງທີ່ເຂົ້າມາຂໍຄຳປຶກສາ, ຂໍຄຳແນະນຳ ແລະ ຂໍຄຳອະທິບາຍທາງດ້ານກົດໝາຍ ມີ 585 ເທື່ອຄົນ; ຈາກນັ້ນ, ໄດ້ພ້ອມກັນຄົ້ນຄວ້າປະກອບຄຳເຫັນ, ພິຈາລະນາແລະ ຮັບຮອງເອົາມະຕິ ວ່າດ້ວຍການຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານປະຈຳ 5 ປີ (2021-2025), ການເຄື່ອນໄຫວວຽກງານ ປະຈຳປີ 2025 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ.

ວັນດຽວກັນ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ ໄດ້ມີກອງປະຊຸມຄົບຄະນະຂອງຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໂດຍການເປັນປະທານຂອງທ່ານ ມະນີວົງ ແສນລາດ ປະທານຄະນະກຳມະການວັດທະນະທຳ-ສັງຄົມແລະບັນດາເຜົ່າ; ມີຮອງປະທານຄະນະກຳມະການ, ສະມາຊິກສະພາປະຊາຊົນແຂວງ ທີ່ສັງກັດໃນຄະນະກຳມະການ, ຕາງໜ້າຈາກພະແນກການທີ່ກ່ຽວຂ້ອງ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງລາຍງານການຈັດຕັ້ງປະຕິບັດວຽກງານປະຈຳປີ2025, ທິດທາງແຜນການ ປະຈຳປີ 2026, ຮັບຟັງລາຍງານການຈັດຕັ້ງປະບັດວຽກງານ 05 ປີຜ່ານມາ (2021-2025) ແລະ ທິດທາງແຜນການ05ປີຕໍ່ໜ້າ(2026-2030), ບັນຫາທີ່ພົ້ນເດັ່ນໃນຂົງເຂດວັດທະນະທຳ-ສັງຄົມ ເປັນຕົ້ນວຽກງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ວຽກງານສຶກສາ ແລະ ວຽກງານແຮງງານ.

ພ້ອມນັ້ນ, ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ ໄດ້ເປີດກອງປະຊຸມ ກອງປະຊຸມຄົບ ປະຈຳປີ 2025 ຂຶ້ນ ທີ່ຫ້ອງປະຊຸມຂອງພະແນກການເງິນ ໂດຍການເປັນປະທານຮ່ວມຂອງທ່ານ ສາຍທອງ ໄຊຍະວົງ ປະທານສະພາປະຊາຊົນແຂວງຈຳປາສັກ, ທ່ານ ອະນຸສັກ ຈັນທະປະເສີດ ປະທານຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ມີສະມາຊິກສະພາປະຊາຊົນແຂວງຈຳປາສັກທີ່ສັງກັດໃນຄະນະກຳມະການ, ປະທານອົງການກວດສອບ ປະຈຳພາກໃຕ້, ຮອງປະທານອົງການກວດກາລັດແຂວງ, ຫົວໜ້າ-ຮອງຫົວໜ້າພະແນກການໃນຂົງເຂດເສດຖະກິດ, ຫົວໜ້າ-ຮອງຫົວໜ້າຂະແໜງການ ແລະ ວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ

**(ສົມວິຈິດ ໄຊມົນຕີ)**

# ສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງ ສພຂ ເຊກອງ



(ສພຂ) - ກອງປະຊຸມສະໄໝສາມັນເທື່ອທີ 10 ຂອງສະພາປະຊາຊົນແຂວງຊຸດທີIV ໄດ້ດຳເນີນໃນວັນທີ 29-30 ທັນວາຜ່ານມາທີ່ສະໂມສອນສະພາປະຊາຊົນແຂວງ (ສພຂ) ເຊກອງ ໂດຍການປະທານຂອງທ່ານດົງ ເພັດ ພະຍົນ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ຂັນຕີ ສີລະວົງສາ ຮອງເລຂາຄະນະບໍລິຫານງານພັກແຂວງ, ປະທານຄະນະກຳມະການປົກຄອງແຂວງ; ມີບັນດາການນຳພັກ-ລັດ ຂັ້ນແຂວງ, ອະດີດການນຳຂອງແຂວງ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ, ສະມາຊິກສະພາປະຊາຊົນແຂວງ (ສສຂ) ແລະ ແຂກຖືກເຊີນເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາແລະຮັບຮອງເອົາບັນດາເນື້ອໃນທີ່ສຳຄັນຂອງທ້ອງຖິ່ນ ໂດຍອອກເປັນມະຕິ 8 ສະບັບ ຄື: 1) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານ ຂອງອົງການປົກຄອງແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ5ປີ(2021-2025); ປະຈຳປີ 2025, ການດັດແກ້ງົບປະມານແຫ່ງລັດ ລາຍຮັບ-ລາຍຈ່າຍ ວິຊາການຂອງຂະແໜງການຂັ້ນທ້ອງຖິ່ນ ປີ 2025 ແລະ ງົບປະມານເກີນແຜນ ປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານປະຈຳປີ 2026; 2) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການສ້າງຕັ້ງ ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງແຂວງເຊກອງ; 3) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາການສ້າງຕັ້ງຕາແສງ ຂອງແຂວງເຊກອງ; 4) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 5 ປີ (2021-2025);ປະຈຳປີ2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວ ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປະຈຳປີ 2024 ຂອງອົງການກວດສອບແຫ່ງລັດ ປະຈຳພາກໃຕ້; 5) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 5 ປີ (2021-2025);ປະຈຳປີ2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026; ບົດລາຍງານຜົນການກວດກາຕາມຜົນການກວດສອບ ປີ 2023 ຂອງອົງການກວດກາລັດແຂວງ; 6) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 5 ປີ (2021-2025);ປະຈຳປີ2025 ແລະ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2026 ຂອງສານປະຊາຊົນແຂວງ; 7) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 5 ປີ (2021-2025); ປະຈຳປີ 2025 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2026 ຂອງອົງການໄອຍະການປະຊາຊົນແຂວງ ແລະ 8) ມະຕິກອງປະຊຸມສະພາປະຊາຊົນແຂວງ ວ່າດ້ວຍການຮັບຮອງເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ 5 ປີ (2021-2025); ປະຈຳປີ 2025 ຂອງສະພາປະຊາຊົນແຂວງ ຊຸດທີ IV ແລະ ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

ກ່ອນໜ້ານີ້, ວັນທີ 28 ທັນວາຜ່ານມາ, ສພຂ ເຊກອງ ໄດ້ຈັດກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນ ໃຫ້ແກ່ການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງ ສພຂ ຊຸດທີIV ໂດຍການເປັນປະທານຂອງທ່ານ ປອ. ແພງສີ ສີລາວີ ຮອງປະທານສະພາປະຊາຊົນແຂວງ; ມີບັນດາທ່ານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 16, ສສຂ ປະຈຳເມືອງ ແລະ ແຂກຖືກເຊີນເຂົ້າຮ່ວມ.

ຈຸດປະສົງເພື່ອເປັນການສ້າງເງື່ອນໄຂໃຫ້ແກ່ສສຊແລະ ສສຂ ໄດ້ສຸມໃສ່ຄົ້ນຄ້ວາ, ປຶກສາຫາລືແລກປ່ຽນຄຳຄິດເຫັນ ແລະ ສ້າງຄວາມເຂົ້າໃຈເປັນເອກະພາບຕໍ່ບັນດາເນື້ອໃນຮ່າງບົດລາຍງານ ທີ່ຈະນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງ ສພຂ ຊຸດທີ IV ທັງສາມາດຮັບປະກັນການປະຕິບັດພາລະບົດບາດຂອງແຕ່ລະພາກສ່ວນໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍທີ່ກຳນົດໄວ້.

**(ນາລີວັນ)**



# ສພຂ ອັດຕະປື ສ້າງແລະປັບປຸງນິຕິກຳໃຕ້ກົດໝາຍ 3 ສະບັບ




(ສພຂ) - ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ອັດຕະປື ຊຸດທີ IV ໄດ້ດຳເນີນໃນວັນທີ 24-26 ທັນວາຜ່ານມາ ທີ່ຫ້ອງປະຊຸມ ສພຂ ພາຍໃຕ້ການເປັນປະທານຂອງທ່ານນາງ ມິນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງອັດຕະປື; ເຂົ້າຮ່ວມມີການນຳພັກ-

ອ່ານຕໍ່ໜ້າ 12

# ສພຂ ອັດຕະປື ຮັບຮອງເອົາໂຄງປະກອບກົງຈັກ ການຈັດຕັ້ງຂອງຄະນະກຳມະການປົກຄອງແຂວງ



(ສພຂ) - ກອງປະຊຸມສະໄໝວິສາມັນເທື່ອທີ 2 ຂອງສະພາປະຊາຊົນແຂວງ (ສພຂ) ອັດຕະປື ຊຸດທີ່ IV ໄດ້ດຳເນີນໃນວັນທີ 17 ທັນວາຜ່ານມາ ທີ່ຫ້ອງປະຊຸມໃຫຍ່ແຂວງອັດຕະປື, ພາຍໃຕ້ການເປັນປະທານຂອງທ່ານ ນາງ ມີນາພອນ ໄຊສົມພູ ປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີການນຳພັກ-ລັດຂອງແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ອາດີດການນຳພັກ-ລັດ ພ້ອມດ້ວຍແຂກທີ່ຖືກເຊີນເຂົ້າຮ່ວມ.

ໃນກອງປະຊຸມໄດ້ພິຈາລະນາຮັບຮອງເອົາໂຄງປະກອບກົງຈັກການຈັດຕັ້ງຂອງຄະນະກຳມະການປົກຄອງແຂວງ ໂດຍພິຈາລະນາຮັບຮອງເອົາການແຕ່ງຕັ້ງ ແລະ ຍົກຍ້າຍ, ປະທານ, ຮອງປະທານຄະນະກຳມະການປົກຄອງແຂວງ ແລະ ບຸກຄາລະກອນທີ່ເປັນກຳມະການ ຄະນະກຳມະການປົກຄອງແຂວງ ຄື:

1. ທ່ານ ທະນູໄຊ ບັນຊາລິດເປັນປະທານຄະນະກຳມະການປົກຄອງແຂວງ

2. ທ່ານ ສຸລິວົງ ອະໄພວົງ ເປັນຮອງປະທານຄະນະກຳມະການປົກຄອງແຂວງຄວບຕຳແໜ່ງຫົວໜ້າພະແນກການເງິນ

3. ທ່ານ ສີໄລ ສີສະແຫວງສຸກເປັນຮອງປະທານຄະນະກຳມະການປົກຄອງແຂວງ

4. ທ່ານ ພັອ ສັກສິດ ສີພັນດວງ ເປັນຫົວໜ້າກອງບັນຊາການປ້ອງກັນຄວາມສະຫງົບແຂວງ

5. ທ່ານ ບຸນທະມາລີ ໝັ້ນອານິງເປັນຫົວໜ້າພະແນກຍຸຕິທຳ

6. ທ່ານ ຄຳໝັ້ນ ສີສະໝຸດ ເປັນຫົວໜ້າພະແນກສາທາລະນະສຸກແຂວງ

7. ທ່ານ ພອນໄຊ ໄກສອນເສນາ ເປັນຫົວໜ້າພະແນກໂຍທາທິການ ແລະ ຂົນສົ່ງແຂວງ

8. ທ່ານ ອຸດົມສິນ ສີຊານົນ ເປັນຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ

9. ທ່ານ ນາງ ພອນມະນີ ຂຽນໄຊຍະວົງ ເປັນຫົວໜ້າພະແນກແຮງງານແລະສະຫວັດດີການສັງຄົມແຂວງ

10. ທ່ານ ມີໄຊ ສີສະແຫວງສຸກ ເປັນຫົວໜ້າຫ້ອງການຄະນະກຳມະການສົ່ງເສີມແລະຄຸ້ມຄອງການລົງທຶນແຂວງ

11. ທ່ານ ປອ ຄຳພັນແກ້ວມະນີເປັນຫົວໜ້າພະແນກການຕ່າງປະເທດແຂວງ

12. ທ່ານ ລິດຄຳ ໂຣມອິນຕາ ເປັນຫົວໜ້າຫ້ອງວ່າການແຂວງ

13. ທ່ານ ກົງໃຈ ສີດາວົງ ເປັນຫົວໜ້າພະແນກກະສິກຳ ແລະ ສິ່ງແວດລ້ອມແຂວງ

14. ທ່ານ ສຸດໃຈ ກົມມະເມືອງ ເປັນຫົວໜ້າພະແນກອຸດສະຫະກຳແລະການຄ້າແຂວງ

15. ທ່ານ ຂັນທອງ ຍິ້ມດາວົງເປັນຫົວໜ້າພະແນກເຕັກໂນໂລຊີແລະການສື່ສານແຂວງ

16. ທ່ານ ພັອ ບຸນຈັນ ສີຫາວົງ ເປັນຫົວໜ້າການທະຫານ ກອງບັນຊາການທະຫານແຂວງ

17. ທ່ານ ບຸນປອນ ອ່ອນໄຊວຽງ ເປັນຫົວໜ້າພະແນກວັດທະນະທຳ ແລະ ການທ່ອງທ່ຽວແຂວງ.

18. ທ່ານ ອິນປັນ ອິນທິລາດ ໄປຮັບໜ້າທີ່ໃໝ່ຢູ່ອົງຄະນະພັກເມືອງສາມັກຄີໄຊ.

19. ທ່ານ ສົມໄຊ ແກ້ວມະນີວັນ ໄປຮັບໜ້າທີ່ໃໝ່ຢູ່ອົງຄະນະພັກເມືອງໄຊເສດຖາ.

**(ວິນັດ ສີສຸລາດ)**

# ສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງ ສພຂ ໄຊສົມບູນ



(ສພຂ) ກອງປະຊຸມສະໄໝສາມັນ ເທື່ອທີ 10 ຂອງສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ຊຸດທີ IV ໄດ້ດຳເນີນໃນວັນທີ 29-31 ທັນວາຜ່ານມາທີ່ສະໂມສອນເມືອງອະນຸວົງ, ໂດຍພາຍໃຕ້ການເປັນປະທານຂອງທ່ານ ແດງ ປະທຸມທອງ ສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 18, ປະທານສະພາປະຊາຊົນແຂວງໄຊສົມບູນ; ໂດຍການເຂົ້າຮ່ວມຂອງທ່ານ ພົຈວ. ບົວພັນ ອິນທະປັນຍາ ປະທານຄະນະກຳມະການປົກຄອງແຂວງໄຊສົມບູນ; ມີການນຳພັກ-ລັດຂັ້ນແຂວງ, ອະດີດການນຳພັກ-ລັດຂອງແຂວງ, ສະມາຊິກສະພາແຫ່ງຊາດ(ສສຊ)ປະຈຳເຂດເລືອກຕັ້ງທີ 18, ປະທານອົງການກວດສອບປະຈຳພາກກາງ ພ້ອມດ້ວຍພະແນກການ, ອົງການ,ກົມກອງອ້ອມຂ້າງແຂວງ ຕະຫຼອດຮອດນັກປະຕິວັດອາວຸໂສ, ຜູ້ຊົງຄຸນວຸດທິ ແລະ ນັກທຸລະກິດເຂົ້າຮ່ວມ.

ກອງປະຊຸມໄດ້ຄົ້ນຄວ້າພິຈາລະນາ ແລະ ຮັບຮອງເອົາບັນດາເນື້ອໃນສຳຄັນຂອງແຂວງ ຄື: ບົດລາຍງານ ຂອງຄະນະກຳມະການປົກຄອງແຂວງກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026; ຮັບຮອງເອົາການເຄື່ອນໄຫວວຽກງານ ປະຈຳປີ 2025 ແລະ ທິດທາງແຜນການປະຈຳປີ 2026, ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບ ປະມານແຫ່ງລັດປະຈຳປີ 2024 ຂອງອົງການກວດສອບປະຈຳພາກກາງ; ຮັບຮອງເອົາບົດລາຍງານການເຄື່ອນໄຫວວຽກງານ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງອົງການກວດກາລັດແຂວງໄຊສົມບູນ; ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໄລຍະ 5 ປີ (2021-2025), ປະຈຳປີ 2025, ວຽກງານຈຸດສຸມຮອດກອງປະຊຸມຄັ້ງປະຖົມມະລຶກ ທິດທາງແຜນການປະຈຳປີ 2026 ຂອງຄະນະປະຈຳສະພາປະຊາຊົນແຂວງໄຊສົມບູນ; ຮັບຮອງເອົາບົດລາຍງານຜົນການຈັດຕັ້ງປະຕິບັດວຽກງານແກ້ໄຂຄວາມທຸກຍາກ 2025 ແລະ ທິດທາງແຜນການປະຈຳປີ 2026 ຂອງແຂວງ; ຮັບຮອງເອົາບົດລາຍງານຂອງສານປະຊາຊົນແຂວງ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026; ຮັບຮອງເອົາບົດລາຍງານຂອງອົງການໄອຍະການປະຊາຊົນແຂວງ ປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026.

ພ້ອມນີ້, ຍັງໄດ້ມອບໃບຍ້ອງຍໍ ແລະ ໃບຢັ້ງຢືນຜົນງານ 5 ປີ ແກ່ສະມາຊິກສະພາແຫ່ງຊາດເຂດເລືອກຕັ້ງທີ 18 ແລະ ມອບໃບຍ້ອງຜົນງານ 5 ປີ ໃຫ້ບັນດາຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງທັງ 5 ເມືອງ.

**(ອຳໄພພອນ ແກ້ວວິໄລ)**

# ກອງປະຊຸມປະຈຳປີ 2025 ຂອງ 3 ຄະນະກຳມະການ ສພຂ ໄຊສົມບູນ



(ສພຂ) - ກອງປະຊຸມຄົບຄະນະ ຂອງສາມຄະນະກຳມະການ ສະພາປະຊາຊົນແຂວງ (ສພຂ) ໄຊສົມບູນ ປະຈຳປີ 2025 ໄດ້ດຳເນີນໃນວັນທີ 26 ທັນວາຜ່ານມາ ທີ່ສະໂມສອນເມືອງອະນຸວົງ ພາຍໃຕ້ການເປັນປະທານຂອງ ທ່ານ ຄຳພູທອນ ວົງພະຈັນ ຮອງປະທານສະພາປະຊາຊົນແຂວງ; ມີບັນດາຄະນະກຳມະການສະພາປະຊາຊົນແຂວງ, ຕະຫຼອດຮອດແຂກຖືກເຊີນແລະພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ຄຳພູທອນ ວົງພະຈັນ ໃຫ້ຮູ້ວ່າ: ກອງປະຊຸມໃນຄັ້ງນີ້ກໍເພື່ອເປັນການສະຫຼຸບວຽກງານ ຂອງ 3 ຄະນະກຳມະການ ຄື:ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ, ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ແລະ ຄະນະກຳມະການຍຸຕິທຳແລະປ້ອງກັນຊາດ-ປ້ອງກັນຄວາມສະຫງົບ (ປກຊ-ປກສ) ທັງທົບທວນຄືນຜົນການຈັດຕັ້ງປະຕິບັດວຽກງານໃນໄລຍະ 5 ປີຜ່ານມາ ຂອງແຕ່ລະຄະນະກຳມະການແລະວິເຄາະຫາຈຸດດີ, ຈຸດອ່ອນ ແລະ ຂໍ້ຄົງຄ້າງ ເພື່ອຖອດຖອນບົດຮຽນໃນການປັບປຸງແກ້ໄຂໃຫ້ດີຂຶ້ນ.

ກອງປະຊຸມໄດ້ຮັບຟັງຜ່ານຮ່າງບົດສະຫຼຸບປະຈຳ 5 ປີ 2021-2025 ຂອງຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ; ຮ່າງບົດສະຫຼຸບປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ 2026 ຂອງຄະນະກຳມະການ ເສດຖະກິດ ແຜນການ ແລະ ການເງິນ; ຮ່າງບົດສະຫຼຸບປະຈຳ 5 ປີ 2021-2025 ຂອງຄະນະ ກຳມະການວັດທະນະທຳ ແລະ ບັນດາເຜົ່າ; ຮ່າງບົດສະຫຼຸບປະຈຳປີ 2025 ແລະ ທິດທາງແຜນການ ປະຈຳປີ2026ຂອງຄະນະກຳມະການວັດທະນະທຳ ແລະ ບັນດາເຜົ່າ, ຮ່າງມະຕິ ຄະນະກຳມະການເສດຖະກິດ, ແຜນການ ແລະ ການເງິນ;ຮ່າງມະຕິຄະນະກຳມະການວັດທະນະທຳ ແລະ ບັນດາເຜົ່າ, ຮ່າງບົດສະຫຼຸບປະຈຳ 5 ປີ 2021-2025ຂອງຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ; ຮ່າງບົດສະຫຼຸບປະຈຳປີ 2025 ແລະ ທິດທາງແຜນການປະຈຳ ປີ 2026 ຂອງຄະນະຄະນະກຳມະການຍຸຕິທຳ ແລະ ປກຊ-ປກສ ແລະ ຮ່າງມະຕິ ຂອງຄະນະກຳມະການຍຸຕິທຳແລະປກຊ-ປກສ ອີກດ້ວຍ; ຈາກນັ້ນ, ກໍໄດ້ປະກອບຄຳຄິດ-ຄຳເຫັນຕໍ່ຮ່າງບົດສະຫຼຸບຕ່າງໆ ດ້ວຍຄວາມຮູ້ຄວາມສາມາດ ເພື່ອເຮັດໃຫ້ເນື້ອໃນຂອງບັນດາບົດສະຫຼຸບ ມີເນື້ອໃນທີ່ຖືກຕ້ອງ, ຊັດເຈນ ແລະ ຮັດກຸມດີຂຶ້ນກວ່າເກົ່າ.

**(ອຳໄພພອນ ແກ້ວໄລ)**




# ຊອກຮູ້: ໂຄງການ ການເມືອງ ສະບັບທີ 3

# ທິດດີ

ຫາກເພື່ອນຜູ້ອ່ານຕິດຕາມກອງປະຊຸມໃຫຍ່ຄັ້ງທີ XII ຂອງພັກເຮົາ ຈະເຫັນວ່າມີການສະເໜີໂຄງການການເມືອງ ສະບັບທີ 3 ວ່າດ້ວຍການບູລະນະລະບອບປະຊາທິປະໄຕປະຊາຊົນກ້າວຂຶ້ນສູ່ສັງຄົມນິຍົມ.

ນັບແຕ່ພັກປະຊາຊົນປະຕິວັດລາວ ໄດ້ຮັບການສ້າງຕັ້ງຂຶ້ນ ພັກເຮົາໄດ້ວາງໂຄງການການເມືອງອອກ 2 ຄັ້ງ ຄື: ຄັ້ງທີ I ແມ່ນເປັນໂຄງການການເມືອງສະບັບທຳອິດ ທີ່ປະກາດອອກໃນວັນທີ 22 ມີນາ 1955 ເຊິ່ງເປັນໂຄງການການເມືອງທີ່ກຳນົດທິດນຳຂອງພັກ ແລະ ຖືເປັນແນວທາງກຳນົດໃຫ້ພັກເຮົາພາຍຫຼັງສ້າງຕັ້ງຂຶ້ນ ໄດ້ດຳເນີນພາລະກິດຕໍ່ສູ້ຕ້ານການຮຸກຮານຈາກຈັກກະພັດລ່າເມືອງຂຶ້ນ ແລະ ລູກມືຂອງພວກເຂົາ; ໂຄງການການເມືອງສະບັບນີ້ໄດ້ກາຍເປັນແສງສະຫວ່າງເຍືອງທາງນຳພາປະຊາຊົນລາວຕໍ່ສູ້ປະຕິວັດ ຈົນເຖິງກອງປະຊຸມໃຫຍ່ ຄັ້ງທີ II ຂອງພັກ.

ໂຄງການການເມືອງສະບັບທີ 2 ໄດ້ສ້າງຂຶ້ນໃນກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ II ຂອງພັກ, ຈັດຂຶ້ນໃນວັນທີ 03-06 ກຸມພາ 1972; ໂຄງການການເມືອງສະບັບນີ້ ແມ່ນການວາງແນວທາງຕໍ່ສູ້ຕ້ານການຮຸກຮານຂອງຈັກກະພັດລ່າເມືອງຂຶ້ນແບບໃໝ່ ດ້ວຍຄຳຂວັນ: ດຳເນີນການປະຕິວັດຊາດ ປະຊາທິປະໄຕ ເພື່ອນຳເອົາເອກະລາດແຫ່ງຊາດ, ລຶບລ້າງລະບອບລາຊາທິປະໄຕກ້າວໄປເຖິງການສະຖາປະນາລະບອບໃໝ່ຂຶ້ນໃນປະເທດລາວ...

ໂຄງການການເມືອງທັງສອງສະບັບຂອງພັກ ໄດ້ຮັບການປະຕິບັດຢ່າງມີຜົນສຳເລັດອັນສະຫງ່າລາສີ ເຊິ່ງນຳມາເຖິງການສຳເລັດພາລະກິດປົດປ່ອຍຊາດ, ຍາດໄດ້ເອກະລາດແຫ່ງຊາດ, ອຳນາດອະທິປະໄຕແລະກ້າວເຖິງການສະຖາປະນາສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຂຶ້ນຢ່າງສະຫງ່າຜ່າເຜີຍ ໃນວັນທີ 2 ທັນວາ ປີ 1975.

50 ປີ ແຫ່ງການສະຖາປະນາ ສາທາລະນະລັດປະຊາທິປະໄຕປະຊາຊາຊົນລາວຜ່ານມາເປັນເວລາ50ປີທີ່ພັກເຮົາໄດ້ກາຍເປັນພັກກຳອຳນາດ, ນຳພາຮຳບາດແຜສົງຄາມ, ຟື້ນຟູເສດຖະກິດຂອງຊາດ ແລະ ໄລຍະຕໍ່ມາ ພັກເຮົາພາຍໃຕ້ການນຳຂອງປະທານ ໄກສອນ ພົມວິຫານ ໄດ້ກຳນົດແນວທາງປ່ຽນແປງໃໝ່ເຊິ່ງເປັນການສ້າງການຫັນປ່ຽນທາງດ້ານຈິນຕະນາການໃຫ້ຖືກຕ້ອງສອດຄ່ອງກັບຈຸດພິເສດຂອງປະເທດ ແລະ ການປ່ຽນແປງຂອງໂລກ ເຊິ່ງໄດ້ກາຍເປັນທວນໄຟແຫ່ງແສງສະຫວ່າງດວງໃໝ່ ທີ່ເກີດຂຶ້ນໃນປະເທດເຮົາ ແລະ ທວນໄຟດວງນີ້ ໄດ້ເປັນເຂັມທິດເຍືອງທາງໃຫ້ພັກເຮົາເດີນຕາມ ໂດຍໃຊ້ເວລາ 40 ປີຜ່ານມາ ແລະ ແນວທາງປ່ຽນແປງໃໝ່ນີ້ ຍັງສືບຕໍ່ເປັນທິດນຳໃຫ້ພວກເຮົາເດີນຕາມຕໍ່ໆໄປຢ່າງບໍ່ທໍ້ຖອຍ ເພາະວ່າແນວທາງປ່ຽນແປງໃໝ່ ເປັນແນວທາງທີ່ກຳນົດອອກມາຢ່າງເປັນລະບົບຄົບຊຸດ, ລວມທັງຈຸດເລີ່ມ ແລະ ການຕີຂອບທີ່ຮັດກຸມ ແລະ ຈັດວາງບຸລິມະສິດໃນຂົງເຂດທີ່ຕ້ອງປ່ຽນແປງ, ສ້າງໄດ້ຄວາມຮັບຮູ້ໃໝ່ດ້ານທິດສະດີກ່ຽວກັບສັງຄົມນິຍົມ ແລະ ເສັ້ນທາງກ້າວຂຶ້ນຂອງປະເທດເຮົາຢ່າງແທດເໝາະກັບຄວາມສາມາດທີ່ອຳນວຍໃຫ້ໃນແຕ່ລະໄລຍະ ເຊິ່ງຖືໄດ້ວ່າແນວທາງປ່ຽນແປງໃໝ່ຮອບດ້ານທີ່ມີຫຼັກການຂອງພັກທີ່ວາງອອກ ແລະ ການທີ່ພັກເຮົານຳພາເຂົ້າສູ່ການປະຕິບັດ 40 ປີຜ່ານມານີ້ ແມ່ນໄດ້ນຳປະເທດເຮົາ ສາມາດຜ່ານພົ້ນພາຍຸລົມແດງ ແລະ ສິ່ງທ້າທາຍທົດສອບອັນລະອິດລະອ້ຽວ, ຂ້ຽວຂາດມາໄດ້, ລະບອບປະຊາທິປະໄຕປະຊາຊົນຂອງພວກເຮົາ ໄດ້ຮັບການບູລະນະໃຫ້ເປັນລະບົບ, ຕໍ່ເນື່ອງ ແລະ ນັບມື້ນັບສົມບູນຍິ່ງໆຂຶ້ນ.

ການສ້າງໂຄງການການເມືອງສະບັບທີ 3 ຂຶ້ນມານີ້ ແມ່ນການສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ທີ່ປະທານ ໄກສອນ ພົມວິຫານ ເປັນຜູ້ລິເລີ່ມແລະເປັນສະຖາປະນິກຕົ້ນຕໍທີ່ປະໄວ້ໃຫ້ພວກເຮົາສືບທອດຕໍ່ໄປຢ່າງບໍລິສຸດ ແລະ ຈົງຮັກພັກດີຕະຫຼອດໄລຍະ 70 ປີແຫ່ງການນຳພາຂອງພັກເຮົາໃນພາລະກິດຕໍ່ສູ້ກູ້ຊາດ ກໍຄືໃນພາລະກິດແຫ່ງການປົກປັກຮັກສາແລະສ້າງສາພັດທະນາປະເທດຊາດ.

ໃນນາມສ່ວນຕົວຜູ້ຂຽນເຫັນວ່າ: ໂຄງການການເມືອງ ສະບັບທີ 3 ທີ່ຜ່ານໃນກອງປະຊຸມຄັ້ງນີ້ ແມ່ນເປັນໂຄງການການເມືອງທີ່ກຳນົດທິດທາງວິໄສທັດລະອຽດໂດຍສະເພາະມີ 11 ນະໂຍບາຍໃຫຍ່ທີ່ກຳນົດອອກໃນໂຄງການການເມືອງແຕ່ນີ້ຈົນຮອດປີ 2055 ຖືວ່າໄດ້ກຳນົດຊັດເຈນ ແລະ ຈະແຈ້ງໃນແຕ່ລະນະໂຍບາຍຕ່າງໆ.

ນີ້ແມ່ນໂຄງການການເມືອງ ສະບັບທີ 3 ວ່າດ້ວຍການບູລະນະລະບອບ ປະຊາທິປະໄຕປະຊາຊົນກ້າວຂຶ້ນສູ່ສັງຄົມນິຍົມ; ການສ້າງໂຄງການການເມືອງສະບັບທີ 3 ຂຶ້ນມານີ້ ແມ່ນການສືບຕໍ່ປະຕິບັດແນວທາງປ່ຽນແປງໃໝ່ທີ່ປະທານ ໄກສອນ ພົມວິຫານ ເປັນຜູ້ລິເລີ່ມ ແລະ ເປັນສະຖາປະນິກຕົ້ນຕໍທີ່ປະໄວ້ໃຫ້ພວກເຮົາສືບທອດຕໍ່ໄປຢ່າງບໍລິສຸດ ຈົງຮັກພັກດີ.

ຜູ້ຂຽນຂໍນຳສະເໜີໂດຍສັງເຂບເນື້ອໃນພື້ນຖານຂອງການບູລະນະ ລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ ຢູ່ປະເທດເຮົາທີ່ໄດ້ບັນຈຸເຂົ້າໃນໂຄງການການເມືອງ ສະບັບທີ 3 ເຊິ່ງມີດັ່ງນີ້:

1. ຈຸດໝາຍທິດທາງໃນການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ.

2. ສືບຕໍ່ຍູ້ແຮງການບູລະນະລະບອບປະຊາທິປະໄຕປະຊາຊົນ ກ້າວຂຶ້ນສູ່ສັງຄົມນິຍົມ ເຊິ່ງໄດ້ວາງ 11 ແຜນນະໂຍບາຍໃຫຍ່ຄື:

**ໜຶ່ງ:** ພັດທະນາເສດຖະກິດຕະຫຼາດຕາມທິດສັງຄົມນິຍົມ ໃຫ້ເປັນລະບົບ, ທັນສະໄໝ;

**ສອງ:** ຫັນເປັນອຸດສາຫະກຳ, ຫັນເປັນທັນສະໄໝ, ຫັນເປັນດີຈິຕອນ;

**ສາມ:** ການປົກປັກຮັກສາ ແລະ ຟື້ນຟູສິ່ງແວດລ້ອມ ຮັບມືກັບການປ່ຽນ ແປງດິນຟ້າອາກາດ;

**ສີ່:** ພັດທະນາວັດທະນະທຳ-ສັງຄົມ;

**ຫ້າ:** ພັດທະນາຄົນລາວຢ່າງຮອບດ້ານ ຕອບສະໜອງໄດ້ຄວາມຮຽກຮ້ອງຕ້ອງການຂອງການພັດທະນາປະເທດຊາດໃນໄລຍະໃໝ່;

**ຫົກ:** ສ້າງເຫງົ້າພະລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ທີ່ມີຄວາມໜັກແໜ້ນ, ເຂັ້ມແຂງ ແລະ ມີແບບແຜນທັນສະໄໝ;

**ເຈັດ:** ຢຶດໝັ້ນແນວທາງຕ່າງປະເທດຂອງພັກ;

**ແປດ:** ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ; ຮັບປະກັນການກຳອຳນາດຂອງພັກໃຫ້ມີຄວາມໝັ້ນຄົງ;

**ເກົ້າ:** ສ້າງລັດປະຊາທິປະໄຕປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ;

**ສິບ:** ເສີມຂະຫຍາຍມະຫາສາມັກຄີທົ່ວປວງຊົນ;

**ສິບເອັດ:** ເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນຢ່າງບໍ່ຢຸດຢັ້ງ.

ຂ້າງເທິງນັ້ນ ແມ່ນຕັບ-ບີ ຂອງໂຄງການການເມືອງ ສະບັບທີ 3 ທີ່ຢາກນຳສະເໜີໃຫ້ເພື່ອນຜູ້ອ່ານໄດ້ຮັບຊາບນໍ! ສ່ວນລາຍລະອຽດຄົງຈະມີການຈັດຕັ້ງເຊື່ອມຊຶມຢ່າງເປັນຂະບວນໃນທົ່ວປະເທດ.



## ປອ. ໄຊສົມພອນ...

(ຕໍ່ຈາກໜ້າ 1)

ຊົມເຊີຍຕໍ່ສະຫາຍ ເຈີ່ນ ແທັງ ເໝີນ ທີ່ໄດ້ຮັບເລືອກຕັ້ງເປັນກຳມະການກົມການເມືອງສູນກາງພັກກອມມູນິດຫວຽດນາມອີກສະໄໝໜຶ່ງ ແລະ ຕີລາຄາສູງຕໍ່ການມາຢ້ຽມຢາມລັດຖະກິດໃນຄັ້ງນີ້ ເຊິ່ງສະແດງໃຫ້ເຫັນເຖິງສາຍພົວພັນມິດຕະພາບອັນຍິ່ງໃຫຍ່, ຄວາມສາມັກຄີພິເສດ, ການຮ່ວມມືຮອບດ້ານ ແລະ ຫຸ້ນສ່ວນຍຸດທະສາດ ລະຫວ່າງສອງພັກ, ສອງລັດ ແລະ ປະຊາຊົນສອງຊາດ ລາວ-ຫວຽດນາມ ໄດ້ຮັບການເສີມຂະຫຍາຍຢ່າງບໍ່ຢຸດຢັ້ງໃນທຸກໆຂົງເຂດ ເປັນຕົ້ນ ການພົວພັນຮ່ວມມືລະຫວ່າງສະພາແຫ່ງຊາດຂອງສອງປະເທດ ແລະ ບັນດາຂະແໜງການສູນກາງ ແລະ ທ້ອງຖິ່ນ ໄດ້ມີບາດກ້າວຂະຫຍາຍຕົວຂຶ້ນເລື້ອຍໆ, ສອງຝ່າຍໄດ້ມີການຊ່ວຍເຫຼືອ ແລະ ສະໜັບສະໜູນເຊິ່ງກັນແລະກັນ ທັງໃນຂອບສອງຝ່າຍ ແລະ ຫຼາຍຝ່າຍ ໃນເວທີພາກພື້ນ ແລະ ສາກົນ ຕະຫຼອດມາ.

ສະຫາຍ ເຈີ່ນ ແທັງ ເໝີນ ໄດ້ສະແດງຄວາມເປັນເອກະພາບສູງຂອງການຕີລາຄາຕໍ່ການພົວພັນ ແລະ ຮ່ວມມືລະຫວ່າງສອງອົງການນິຕິບັນຍັດ ລາວ-ຫວຽດນາມ ໃນໄລຍະຜ່ານມາ ກໍຄືທິດທາງແຜນການຮ່ວມມືໃນຕໍ່ໜ້າ ພ້ອມກັນນີ້, ກໍໄດ້ແດງຄວາມຊົມເຊີຍຢ່າງສຸດໃຈຕໍ່ຜົນສຳເລັດກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XII ຂອງພັກປະຊາຊົນປະຕິວັດລາວ ພ້ອມທັງໄດ້ກ່າວສະແດງຄວາມຍິນດີຕໍ່ສະຫາຍ ໄຊສົມພອນ ພົມວິຫານ ທີ່ໄດ້ຮັບເລືອກຕັ້ງເປັນກຳມະການກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ ສະໄໝທີ XII ເຊິ່ງແມ່ນການຮັບຮູ້ຢ່າງເລິກເຊິ່ງໂດຍພັກ, ລັດ ແລະ ປະຊາຊົນລາວ ຕໍ່ການປະກອບສ່ວນອັນສຳຄັນດ້ານສະຕິປັນຍາ, ຄວາມກ້າຫານ ແລະ ການອຸທິດຕົນ ໃນໄລຍະຜ່ານມາ ທີ່ມີຕໍ່ສະຫາຍປະທານສະພາແຫ່ງຊາດລາວ.

ສອງຝ່າຍໄດ້ແຈ້ງສະພາບການພົ້ນເດັ່ນຂອງປະເທດ ກໍຄືການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດແຕ່ລະປະເທດ ແລະ ເປັນເອກະພາບກ່ຽວກັບທິດທາງແຜນການຮ່ວມມືກັນໃນຕໍ່ໜ້າ ໂດຍສະເພາະແມ່ນການສືບຕໍ່ປັບປຸງເນື້ອໃນຂອງບົດບັນທຶກວ່າດ້ວຍການຮ່ວມມືລະຫວ່າງສອງສະພາແຫ່ງຊາດ ລາວ-ຫວຽດນາມ ແລະ ສອງຫ້ອງວ່າການສະພາແຫ່ງຊາດ ລາວ-ຫວຽດນາມ ສະບັບປີ 2022 ທີ່ຈະໝົດອາຍຸໃນປີ 2026 ໃຫ້ມີຄວາມສອດຄ່ອງກັບສະພາບການຕົວຈິງແຕ່ລະໄລຍະ; ສືບຕໍ່ຊຸກຍູ້ຕິດຕາມການຈັດຕັ້ງປະຕິບັດບັນດາສັນຍາ, ສົນທິສັນຍາ ແລະຂໍ້ຕົກລົງລະຫວ່າງສອງລັດຖະບານ ກໍຄືຜົນຂອງກອງປະຊຸມຂອງການນຳຂັ້ນສູງຂອງສອງພັກ, ສອງລັດ ແລະ ບັນດາໂຄງການຮ່ວມມືຂອງສອງປະເທດ ເພື່ອຮັດໃຫ້ການຮ່ວມມື ທາງດ້ານເສດຖະກິດ, ການຄ້າ ແລະ ການລົງທຶນ ລະຫວ່າງສອງປະເທດມີການຂະຫຍາຍຕົວສູງຂຶ້ນສົມຄູ່ກັບການພົວພັນຮ່ວມມືດ້ານການເມືອງ; ໃນຕໍ່ໜ້າ ໃຫ້ໄດ້ມີການແລກປ່ຽນບົດຮຽນກ່ຽວກັບການສ້າງນິຕິກຳຕ່າງໆ ທີ່ຕິດພັນກັບການສ້າງ ແລະ ປັບປຸງກົດໝາຍ ໃຫ້ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ບັນດາຂະແໜງການທີ່ກ່ຽວຂ້ອງ ໂດຍສະເພາະບົດຮຽນການເປັນສະມາຊິກສະພາຄວບຕຳແໜ່ງເລຂາພັກແຂວງ ແລະ ປະທານສະພາປະຊາຊົນແຂວງແລະເຫັນດີສືບຕໍ່ສະໜັບສະໜູນ ແລະ ຮ່ວມມືກັນ ໃນການເຄື່ອນໄຫວໃນອົງການລັດຖະສະພາພາກພື້ນ ແລະ ສາກົນ.



ສຸກສະບາຍຫາຍໂຣກ

# 7 ອາຫານ ທີ່ສ້າງເມັດເລືອດແດງ

**# ຮຽບຮຽງໂດຍ: ທິວກະທິ**



### 1. ຕັບ

ຕັບເປັນແຫຼ່ງສຳຄັນຂອງທາດເຫຼັກ, ທອງແດງ, ວິຕາມິນບີ 12, ໂຟເລດ ແລະ ວິຕາມິນເອ ເຊິ່ງສານອາຫານເຫຼົ່ານີ້ມີບົດບາດສຳຄັນໃນການສ້າງເມັດເລືອດແດງ ໂດຍສະເພາະທາດເຫຼັກທີ່ຊ່ວຍໃນການຜະລິດເຮໂມໂກບິນ ເຊິ່ງເປັນໂປຼຕີນໃນເມັດເລືອດແດງທີ່ຊ່ວຍລຳລຽງອົກຊີໄປຍັງຈຸລັງຕ່າງໆໃນຮ່າງກາຍ ຖ້າເຮົາຕ້ອງການເພີ່ມປະລິມານເມັດເລືອດແດງ ຕັບຈາກສັດຊະນິດຕ່າງໆ ເຊັ່ນ: ຕັບໝູ, ຕັບງົວ ຫຼື ຕັບໄກ່ ຄືໂຕເລືອກທີ່ດີ.

### 2. ໄຂ່

ໄຂ່ບໍ່ພຽງແຕ່ເປັນແຫຼ່ງໂປຼຕີນທີ່ດີ ແຕ່ຍັງເປັນອາຫານສ້າງເມັດເລືອດແດງທີ່ເຕັມໄປດ້ວຍວິຕາມິນບີ 12, ໂຟເລດ ແລະ ວິຕາມິນເອ ເຊິ່ງຈຳເປັນຕໍ່ການສ້າງ ແລະ ຟື້ນຟູເມັດເລືອດແດງ ການກິນໄຂ່ໃນຄາບອາຫານປະຈຳວັນຈະຊ່ວຍໃຫ້ໄດ້ຮັບສານອາຫານທີ່ຈຳເປັນສຳຫຼັບການສ້າງເມັດເລືອດແດງຢ່າງເຕັມທີ່.

### 3. ຊີ້ນສັດ

ຊີ້ນສັດ ໂດຍສະເພາະຊີ້ນແດງ ເຊັ່ນ: ຊີ້ນງົວ, ຊີ້ນໝູ ແລະ ຊີ້ນແບ້ ເປັນແຫຼ່ງຂອງທາດເຫຼັກໃນຮູບແບບຮີມ (heme iron) ທີ່ຮ່າງກາຍສາມາດດູດຊຶມໄດ້ງ່າຍ ເຊິ່ງມີຄວາມສຳຄັນຕໍ່ການຜະລິດເຮໂມໂກບິນ ການກິນຊີ້ນສັດຈຶ່ງເປັນວິທີໜຶ່ງໃນການເພີ່ມປະລິມານເມັດເລືອດແດງໃຫ້ຮ່າງກາຍໄດ້ຢ່າງມີປະສິດທິພາບ.

### 4. ອາຫານທະເລ

ອາຫານທະເລ ເຊັ່ນ: ຫອຍແມງພູ່, ຫອຍນາງຣົມ, ປາແຊລມອນ ແລະ ປາທູ ເປັນອາຫານທີ່ເຕັມໄປດ້ວຍທາດເຫຼັກ, ວິຕາມິນບີ 12 ແລະ ທອງແດງ ເຊິ່ງຊ່ວຍໃນຈະບວນການສ້າງເມັດເລືອດແດງ ອາຫານທະເລນອກຈາກຈະແຊບແລ້ວ ຍັງຊ່ວຍເສີມສ້າງສຸຂະພາບຂອງເມັດເລືອດແດງໄດ້ດີອີກດ້ວຍ.

### 5. ຜັກໃບຂຽວ

ຜັກໃບຂຽວ ເຊັ່ນ: ຜັກກາດ, ຜັກຫົມ...ເປັນແຫຼ່ງຂອງທາດເຫຼັກ, ໂຟເລດ ແລະ ວິຕາມິນຊີ ເຊິ່ງວິຕາມິນຊີຊ່ວຍໃຫ້ຮ່າງກາຍສາມາດດູດຊຶມທາດເຫຼັກໄດ້ດີຂຶ້ນ ການກິນຜັກໃບຂຽວຢ່າງສະໝ່ຳສະເໝີ ຈະຊ່ວຍໃຫ້ຮ່າງກາຍໄດ້ຮັບສານອາຫານທີ່ຈະເປັນຕໍ່ການສ້າງເມັດເລືອດແດງ.

### 6. ຖົ່ວ

ຖົ່ວຊະນິດຕ່າງໆ ເຊັ່ນ: ຖົ່ວແດງ, ຖົ່ວດຳ, ຖົ່ວເຫຼືອງແລະຖົ່ວດິນ ເປັນແຫຼ່ງສຳຄັນຂອງທາດເຫຼັກ, ໂຟເລດ ແລະ ທອງແດງ ເຊິ່ງເປັນສານອາຫານທີ່ມີສ່ວນຊ່ວຍໃນການຜະລິດເມັດເລືອດແດງການກິນຖົ່ວເປັນປະຈຳສາມາດຊ່ວຍໃຫ້ຮ່າງກາຍມີການສ້າງເມັດເລືອດແດງຢ່າງຕໍ່ເນື່ອງ.

### 7.ໝາກໄມ້ແລະໝາກໄມ້ອົບແຫ້ງ

ໝາກໄມ້ສົດແລະໝາກໄມ້ອົບແຫ້ງ ເຊັ່ນ: ອິນທະຜາລຳ, ສະຕໍເບີຣີ, ລູກເກດ... ເປັນອາຫານທີ່ອຸດົມໄປດ້ວຍທາດເຫຼັກ ແລະ ວິຕາມິນຊີ ການກິນໝາກໄມ້ລົດສົ້ມ ເຊັ່ນ: ໝາກກ້ຽງ ຫຼື ໝາກນາວ ຮ່ວມກັບໝາກໄມ້ເຫຼົ່ານີ້ ຈະຊ່ວຍໃຫ້ຮ່າງກາຍສາມາດດູດຊຶມທາດເຫຼັກໄດ້ດີຂຶ້ນ ແລະ ຊ່ວຍໃນການສ້າງເມັດເລືອດແດງຢ່າງມີປະສິດທິພາບ.

ວິຕາມິນເສີມສ້າງເມັດເລືອດແດງໃຫ້ຮ່າງກາຍແຂງແຮງ ການກິນອາຫານທີ່ມີປະໂຫຍດ ແລະ ຫຼາກຫຼາຍເປັນວິທີສຳຄັນໃນການເສີມສ້າງເມັດເລືອດແດງ ແຕ່ພຽງການກິນອາຫານສ້າງເມັດເລືອດແຫຼງອາດບໍ່ພຽງພໍ ຖ້າທ່ານມີບັນຫາສຸຂະພາບອື່ນໆ ເຊັ່ນ ພະຍາດໄຂ່ຫຼັງ ພະຍາດກ່ຽວກັບໄຂກະດູກຫຼືການຂາດສານອາຫານບາງຊະນິດ ຈຳເປັນຕ້ອງປຶກສາແພດເພື່ອຮັບການປິ່ນປົວຢ່າງເໝາະສົມ.

ນອກນີ້, ການອອກກຳລັງກາຍຢ່າງສະໝ່ຳສະເໝີ ແລະ ການຫຼຸດການດື່ມເຄື່ອງດື່ມມຶນເມົາ ຈະຊ່ວຍໃຫ້ຮ່າງກາຍສ້າງເມັດເລືອດແດງໄດ້ຢ່າງເປັນປົກກະຕິແລະ ມີປະສິດທິພາບເພີ່ມຂຶ້ນ.




# ອວຍພອນ ແດ່ທ່ານຜູ້ແທນ

**# ອຈ. ສີພອນ ສີສະຫວາດ ມສ.ນາປາ**

❊ ຮຽມຂໍຂຽນຂີດແຕ້ມ
ເປັນບົດກອນອວຍພອນ
ຕາມແນວທາງໃສແຈ້ງ
ຍົກສູງບົດບາດຊັ້ນ
ກອນກ່າວມາຖະແຫຼງ
ແດ່ຜູ້ຮັບສະໝັກເລືອກຕັ້ງ
ທົດສະດີເຮືອງຮຸ່ງ
ປະຊາເຊື້ອທົ່ວທານີ

❊ ວັນນີ້ ເປັນວັນດີແກ່ກ້າ
ຕົວແທນປະຊາ
ຖາມຂ່າວພົງພັນເຊື້ອ
ໃຜກໍຍິນດີຊື່ນຊ້ອຍ
ເລີກໃຫຍ່ໄຊງາມ
ຍ່ອງຍາມຖາມຢ້ຽມ
ເມືອງຄຳເປັນຖິ່ນ
ຊົມເຈົ້າຄູ່ຊູ່ຄືນ ນັ້ນແລ້ວ!

❊ ຮຽມຂໍອວຍພອນໃຫ້
ທີລົງສະໝັກ
ເພື່ອເປັນສຽງເສີມໃຫ້
ເອົາຄວາມຂັດຂ້ອງ
ທຸກທ່ານການນຳ
ສູ່ສະພາເຮົານັ້ນ
ປວງປະຊາໄຂກ່າວ
ຍໍຍື້ນສູ່ສະພາ ນັ້ນແລ້ວ!

❊ ອັນໜຶ່ງ ສຸຂະພາບໝັ້ນ
ມາກແຮງກຳລັງ
ນຳພາລາວກ້າວ
ພັດທະນາທຸກດ້ານ
ໝຽວແກ່ນຂັນແຂງ
ຕໍ່ວຽກງານທັນຫ້າວ
ຈະເລີນໄກເຮືອງຮຸ່ງ
ປະຊາເຊື້ອຮັ່ງມີ ຊອບແລ້ວ!

❊ ອັນສອງ ຂໍໃຫ້ສຸກລາບລື້ນ
ອັນຕະລາຍໜີ
ເອົາຄວາມໝອງເສົ້າ
ບໍ່ໃຫ້ຄຸງຂອດຄ້າງ
ສົມດັ່ງມະໂນໝາຍ
ຫ່າງໄກຕົວເຈົ້າ
ປວງປະຊາສິ່ງຕໍ່
ວາງລ້າເປົ່າດາຍ ນັ້ນນາ!

❊ ອັນສາມ ຂໍໃຫ້ສຸກມ່ວນແມ້ງ
ກາຍ-ໃຈເບີກບານ
ເພື່ອນຳຄວາມໝອງເສົ້າ
ເອົາເປັນແນວທາງບອກຊີ້
ສົມດັ່ງມະໂນໝາຍ
ມ່ວນໃນມະໂນເນື້ອ
ປວງຊົນລາວທຸກເຜົ່າ
ປະຊາໄດ້ເພິ່ງອີງ ແດ່ທ້ອນ!



ມ້າຕາຍ ລະບາຍ

**(ເລື່ອງເບົາໆ ເອົ້າແບບກັນເອງ ບໍ່ເຄັ່ງພິທີການ)**

**# ສຽມຫ້ຽນ**

✻ **ເດືອນ**ມັງກອນຜ່ານພົ້ນໄປ ໄດ້ມີກິດຈະກຳຫຼາຍຢ່າງພອມຄຶກຄື້ນ ແລະ ເຫັນວ່າມີຫຼາຍແຂວງກໍກຳລັງກະກຽມບັ້ນເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ແລະ ຫຼາຍຊາວທີ່ບໍ່ສະເໜີລ້ອນແຕ່ກ່ຽວພັນກັບການເລືອກຕັ້ງຢ່າງພົດພື້ນ **ລໍລົມເຊີຍ** ຍົກຍ້ອງນັບດາທ່ານ **ສສ** ທີ່ພອມກະກຽມທົ່ວເໜືອກາງໃຕ້ໃຈກໍຈົດຈໍກຽມພ້ອມ ທາສຽງສະເໜີກ່າວ ເອົາປະຫວັດເຄື່ອນກ້າວ ອອກສູ່ສັງຄົມຮູ້ທົ່ວເຖິງກັນ **ຄັກເດ!**

✻ **ສະ**ບາຍດີປີໃໝ່ ເຊີ່ງໄລຍະນີ້ ເຫັນວ່າພໍ່ແມ່ພີ່ນ້ອງປະຊາຊົນຫຼາຍເຜົ່າ ພອມຢູ່ໃນເທດສະການ **ສົ່ງທ້າຍປີເກົ່າ-ຕ້ອນຮັບປີໃໝ່** ຢ່າງຄຶກຄື້ນ ແລະ ເບີກບານມ່ວນຊື່ນ ພ້ອມນັ້ນ, ອີກບໍ່ເທົ່າໃດວັນຂ້າງໜ້າ ປະເທດເພື່ອນມິດໃກ້ຄຽງ ກໍຈະມີກິດຈະກຳປະຕິບັດຕາມຮີດຄອງປະເພນີຕ້ອນຮັບປີໃໝ່ຢ່າງເປັນທາງການ ແນວໃດກໍຕາມ ຂໍອາໄສເວທີນີ້ ຝາກສົ່ງພອນໄຊ ຂໍໃຫ້ມີຄວາມສຸກ ຊື່ນກາຍ-ໃຈພ້ອມ ວັນວ່າໂລຄາໄຊ ໂພຍໄພເຫີນຫ່າງ **ໄປເນີ!** ເງິນຄຳ ໄຫຼຫຼັ່ງລົ້ນ ເຕັມແໜ້ນອັ່ງຄັງ **ທ່ານເອີຍ!**

## ຊວນຍິ້ມ

**# ພົ້ງລົ້ງ**

### ເລື່ອງ: ຄືບໍ່ຕັ້ງໃຈຮຽນ

**ລູກ:** ພໍ່ໆ... ເປັນຫຍັງເຮືອນຄົນອື່ນຄືຫຼັງໃຫຍ່, ເຮືອນເຮົາຄືຫຼັງນ້ອຍແທ້

**ພໍ່:** ເພາະພໍ່ບໍ່ມີເງິນຄືຄົນອື່ນເດ!!!

**ລູກ:** ແລ້ວເຮັດແນວໃດ ເຮົາຈຶ່ງຊິມີເຮືອນໃຫຍ່ໆງາມໆ ຄືກະເຈົ້າ

**ພໍ່:** ລູກກໍຕ້ອງຕັ້ງໃຈຮຽນໜັງສື ເຮັດວຽກດີໆ ຫາເງິນໃຫ້ໄດ້ຫຼາຍໆ ເພື່ອມາເຮັດເຮືອນຫຼັງໃຫຍ່ໆງາມໆ

**ລູກ:** ແລ້ວເປັນຫຍັງຕອນຍັງນ້ອຍພໍ່ບໍ່ຕັ້ງໃຈຮຽນ???!!!!

## ສຸພາສິດ-ຄະຕິເຕືອນໃຈ

**#ດອກຫຍ້າ**

ທຸກຢ່າງບໍ່ໄດ້ດີທີ່ສຸດ
ແຕ່ຈົ່ງພະຍາຍາມເຮັດໃຫ້ດີທີ່ສຸດ




# Greece ເລີ່ມຂະບວນການ ປັບປຸງລັດຖະທຳມະນູນ

(Xinhua) - ເກຣັກ ເລີ່ມຂະບວນການປັບປຸງລັດຖະທຳມະນູນສະບັບປີ 1975 ໃນວັນຈັນທີ 2 ກຸມພາຜ່ານມາ ໂດຍນາຍົກລັດຖະມົນຕີ ຄີເຣຍຄອສ ມິດໂຊທາກິສ (Kyriakos Mitsotakis) ເນັ້ນໜັກເຖິງຄວາມຈຳເປັນໃນການເສີມສ້າງຄວາມຮັບຜິດຊອບຂອງລັດຖະມົນຕີ ເຊິ່ງເປັນສ່ວນໜຶ່ງຂອງການຊຸກຍູ້ການປະຕິຮູບສະຖາບັນທີ່ກວ້າງຂວາງ; ມິດໂຊທາກິສ ກ່າວວ່າ ການປັບປຸງຄັ້ງນີ້ມີຈຸດປະສົງເພື່ອເພີ່ມຄວາມໂປ່ງໃສທາງການເມືອງ, ປັບປຸງການບໍລິຫານລັດໃຫ້ທັນສະໄໝ ແລະ ເສີມສ້າງຄວາມເປັນເອກະລາດຂອງສານ; ໃນຂະນະດຽວກັນ, ກໍເຮັດໃຫ້ປະເທດສາມາດຮັບມືກັບສິ່ງທ້າທາຍທີ່ທັນສະໄໝໄດ້ດີຂຶ້ນ ເຊັ່ນ: ປັນຍາປະດິດ ແລະ ການປ່ຽນແປງຂອງດິນຟ້າອາກາດ. ຕາມການລາຍງານຂອງສະຖານີໂທລະພາບແຫ່ງຊາດເກຣັກ ERT.

ການປະຕິຮູບອື່ນໆທີ່ສະເໜີລວມມີ: ການຍົກເລີກການຜູກຂາດຂອງລັດຕໍ່ການສຶກສາຊັ້ນສູງໂດຍອະນຸຍາດໃຫ້ມີການສ້າງຕັ້ງມະຫາວິທະຍາໄລເອກະຊົນ, ການກຳນົດວາລະດຽວຫົກປີສຳລັບປະທານາທິບໍດີແຫ່ງສາທາລະນະລັດ ແລະ ການຂະຫຍາຍບົດບາດຂອງຜູ້ພິພາກສາໃນການຄັດເລືອກຜູ້ນຳຂອງສານສູງສຸດ.

ມິດໂຊທາກິສຮຽກຮ້ອງໃຫ້ພັກການເມືອງ ແລະ ສັງຄົມມີສ່ວນຮ່ວມຢ່າງສ້າງສັນໃນຂະບວນການນີ້ ແລະ ສະແຫວງຫາຄວາມເຫັນດີເປັນເອກະພາບຢ່າງກວ້າງຂວາງ.

ພາຍໃຕ້ຂອບລັດຖະທຳມະນູນຂອງເກຣັກ, ການປັບປຸງລັດຖະທຳມະນູນ ຕ້ອງໄດ້ຮັບການອະນຸມັດຈາກລັດຖະສະພາສອງສະໄໝຕິດຕໍ່ກັນ.



# ລັດຖະສະພາອີຣານ ພິຈາລະນາກອງທັບ EU ເປັນ "ກຸ່ມກໍ່ການຮ້າຍ" ເພື່ອຕອບໂຕ້



(Xinhua) - ໂມຮຳມັດ ບາເກີ ກາລີບາຟ (Mohammad Bagher Ghalibaf) ປະທານລັດຖະສະພາອີຣານກ່າວໃນວັນອາທິດທີ 1 ກຸມພາ 2026 ວ່າ ປະເທດຂອງຕົນຖືວ່າກອງທັບຂອງສະຫະພາບເອີຣົບ (EU) ເປັນ "ກຸ່ມກໍ່ການຮ້າຍ". ເຂົາສະແດງຄວາມຄິດເຫັນດັ່ງກ່າວເພື່ອຕອບໂຕ້ການທີ່ EU ປະກາດໃຫ້ກອງກຳລັງປົກປ້ອງການປະຕິວັດອິດສະລາມ (Islamic Revolutionary Guards Corps - IRGC) ເປັນອົງການກໍ່ການຮ້າຍ ເມື່ອວັນທີ 29 ມັງກອນຜ່ານມາ, ຕາມລາຍງານຂອງ ICANA ເຊິ່ງເປັນສຳນັກຂ່າວໃນເຄືອຂອງສະພານິຕິບັນຍັດອີຣານ.

"ຜົນສະທ້ອນຂອງການກະທຳນີ້ຈະຕົກຢູ່ກັບສະຫະພາບເອີຣົບ" ກາລີບາຟ ກ່າວ, ເຂົາອະທິບາຍວ່າການກະ ທຳຂອງ EU "ຂາດຄວາມຮັບຜິດຊອບ" ໂດຍເນັ້ນໜັກວ່າ ເປັນການກະທຳຕາມຄຳສັ່ງຂອງປະທານາທິບໍດີສະຫະລັດອາ ເມລິກາ ແລະ ຜູ້ນຳອິດສະຣາແອນ, ເຂົາກ່າວຕື່ມວ່າ ການກ່າວຫາທີ່ "ບໍ່ມີມູນຄວາມຈິງ" ຕໍ່ IRGC ຈະເຮັດໃຫ້ສະຖາ ນະຂອງເອີຣົບໃນລະບຽບໂລກໃນອະນາຄົດຫຼຸດລົງ.

# Spain ສະເໜີແຜນຫ້າມເຍົາວະຊົນ ອາຍຸຕ່ຳກວ່າ 16 ປີ ໃຊ້ສື່ສັງຄົມ




(BBC)-ນາຍົກລັດຖະມົນຕີເປໂດຣຊານເຊຊ(Pedro Sánchez) ແຫ່ງລາຊະອານາຈັກແອັດສະປາຍ ຫຼື ສະເປນ ກ່າວວ່າ ຈະພະຍາຍາມຊຸກຍູ້ກົດໝາຍຫ້າມໃຊ້ສື່ສັງຄົມອອນລາຍສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 16 ປີ ເພື່ອປົກປ້ອງເຍົາວະຊົນຈາກເນື້ອຫາທີ່ເປັນອັນຕະລາຍ ເຊັ່ນ: ຮູບພາບລາມົກອະນາຈານ ແລະ ຄວາມຮຸນແຮງ.

ຊານເຊຊ ກ່າວໃນກອງປະຊຸມສຸດຍອດລັດຖະບານໂລກທີ່ເມືອງດູໄບ ຂອງ ສະຫະນະຄອນເອເມຣັດອາຣັບ(United Arab Emirates - UAE) ເມື່ອວັນທີ 3 ກຸມພາ 2026 ວ່າແອັດສະປາຍ ຈະຫ້າມການເຂົ້າເຖິງສື່ສັງຄົມອອນລາຍສຳລັບຜູ້ເຍົາທີ່ມີອາຍຸຕ່ຳກວ່າ 16 ປີ ແລະ ເວທີຕ່າງໆ ຈະຕ້ອງນຳລະບົບກວດສອບອາຍຸທີ່ມີປະສິດທິພາບມາໃຊ້, ບໍ່ພຽງແຕ່ການສ້າງສັນຍະລັກໃນຊ່ອງທຳເຄື່ອງໝາຍເທົ່ານັ້ນ. ນອກຈາກນັ້ນ, ຍັງສັນຍາວ່າຈະປັບປຸງກົດໝາຍຂອງແອັດສະປາຍ ເພື່ອໃຫ້ຜູ້ບໍລິຫານລະດັບສູງຂອງເວທີຕ່າງໆ ຕ້ອງຮັບຜິດທາງອາຍາຫາກບໍ່ລຶບເນື້ອຫາທີ່ຜິດກົດໝາຍ ຫຼື ສະແດງຄວາມຊັງ.

ກ່ອນໜ້ານີ້, ຜູ້ນຳແອັດສະປາຍ ເຄີຍສະເໜີແນວຄິດການຫ້າມໃຊ້ສື່ສັງຄົມອອນລາຍສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 16 ປີ ເມື່ອເດືອນພະຈິກຜ່ານມາ ກ່ອນຂະຫຍາຍແນວທາງຂອງຕົນໃນວັນອັງຄານ (3 ກຸມພາ) ດ້ວຍ 5 ມາດຕະການທີ່ຈະໄດ້ຮັບການອະນຸມັດເລີ່ມຕັ້ງແຕ່ອາທິດໜ້າ; ຢ່າງໃດກໍຕາມ, ລັດຖະບານປະສົມຂອງເຂົາຂາດສຽງສ່ວນຫຼາຍ, ຈຶ່ງມັກຈະປະເຊີນກັບຄວາມຫຍຸ້ງຍາກໃນການຜ່ານຮ່າງກົດໝາຍ.

# ສະພາ Norway ລົງຄະແນນ ຮັກສາລະບອບລາຊາທິປະໄຕ



(REUTERS) - ວັນທີ 3 ກຸມພາຜ່ານມາ, ສະພາຜູ້ແທນລາດສະດອນນອກແວລົງມະຕິສຽງສ່ວນຫຼາຍຢ່າງຖ້ວມລົ້ນ 141 ຈາກທັງໝົດ 169 ສຽງ ໃຫ້ຮັກສາລະບອບລາຊາທິປະໄຕພາຍໃຕ້ລັດຖະທຳມະນູນທີ່ໃຊ້ລະບົບລັດຖະສະພາຕໍ່ໄປ, ມີພຽງ 26 ສຽງ ທີ່ຕ້ອງການຢຸດຕິການປົກຄອງຂອງກະສັດຮາຣັນ ທີ V (Harald V) ກະສັດປັດຈຸ ບັນຂອງນອກແວ ແລະ ລູກຫຼານຂອງພະອົງ.

ຜູ້ສະໜັບສະໜູນມະຕິຊີ້ໃຫ້ເຫັນວ່າ ລະບອບລາຊາທິປະໄຕນຳມາເຊິ່ງສະຖຽນລະພາບ ແລະ ຢູ່ເໜືອຄວາມຂັດແຍ້ງທາງການເມືອງ ແລະ ສະມາຊິກທຸກຄົນໃນຄອບຄົວລາຊະວົງ ໄດ້ອຸທິດຕົນເພື່ອນອກແວເປັນຢ່າງດີມາຕະຫຼອດ ນັບຕັ້ງແຕ່ປະເທດໄດ້ຮັບເອກະລາດຈາກຊູແອດ (ສະວີເດັນ) ໃນປີ 1905, ສ່ວນຜູ້ຄັດຄ້ານໂຕ້ຖຽງວ່າ "ສິດທິພິເສດທີ່ສືບທອດກັນທາງສາຍເລືອດ" ບໍ່ສອດຄ່ອງກັບສັງຄົມປະຊາທິປະໄຕຂອງນອກແວແລະລັດຖະທຳມະນູນຄວນໄດ້ຮັບການປັບປຸງເພື່ອໃຫ້ຜູ້ດຳລົງປະມຸກລັດ ມາຈາກການເລືອກຕັ້ງໂດຍປະຊາຊົນ.

ຂະນະທີ່ຜົນສຳຫຼວດຄວາມຄິດເຫັນກຸ່ມຕົວຢ່າງຊາວນອກແວ 1,014 ຄົນ ທີ່ຈັດທຳຂຶ້ນໂດຍ Verdens Gang ໜັງສືພິມລາຍວັນລາຍໃຫຍ່ຂອງປະເທດ ພົບວ່າ 61% ຍັງສະໜັບສະໜູນໃຫ້ຮັກສາລະບອບລາຊາທິປະໄຕໄວ້, ແຕ່ຫຼຸດລົງຢ່າງຫຼວງຫຼາຍເມື່ອທຽບກັບປີ 2025 ຢູ່ທີ່ 72%; ໃນທາງກັບກັນ, ຜູ້ທີ່ສະໜັບສະໜູນໃຫ້ປ່ຽນນອກແວ ເປັນລະບອບສາທາລະນະລັດ ເພີ່ມຂຶ້ນເຖິງ 10% ຈາກການສຳຫຼວດເມື່ອປີຜ່ານມາເປັນ 27%.

# ຄະນະປະຈຳສະພາແຫ່ງຊາດຫວຽດນາມ ຫາລືນະໂຍບາຍ ພະລັງງານນິວເຄລຍແລະການກະກຽມການເລືອກຕັ້ງ




(Xinhua)-ວັນອັງຄານທີ 3 ກຸມພາຜ່ານມາ, ຄະນະປະຈຳສະພາແຫ່ງຊາດຫວຽດນາມ ໄດ້ເປີດກອງປະຊຸມຄັ້ງທີ 54 ເພື່ອພິຈາລະນາບັນຫາທີ່ກ່ຽວຂ້ອງກັບນະໂຍບາຍພະລັງງານນິວເຄລຍ ແລະ ການກະກຽມສຳລັບການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດຕໍ່ໄປ.

ປະທານສະພາແຫ່ງຊາດ ເຈິ່ນ ແທັງ ເໝິນ (Tran Thanh Man) ກ່າວວ່າ ຄະນະປະຈຳຈະທົບທວນ ແລະ ຮັບຮອງມະຕິເພີ່ມຕື່ມກ່ຽວກັບກົນໄກ ແລະ ນະໂຍບາຍສຳລັບການລົງທຶນໃນໂຄງການໂຮງງານໄຟຟ້ານິວເຄລຍນິງຖ້ວນ(NinhThuan).

ວາລະກອງປະຊຸມຍັງລວມມີການພິຈາລະນາແລະອະນຸມັດມະຕິກ່ຽວກັບການປັບປຸງຄັ້ງທີສອງຂອງໂຄງປະກອບແລະຈຳນວນຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດຊຸດທີ XVI.

ປະທານສະພາແຫ່ງຊາດເນັ້ນໜັກວ່າ ບັນຫາທີ່ກຳລັງປຶກສາຫາລື ແມ່ນມີຄວາມສຳຄັນຢ່າງຍິ່ງຕໍ່ຄວາມໝັ້ນຄົງດ້ານພະລັງງານຂອງຊາດ, ເຊັ່ນດຽວກັນກັບການກະກຽມສຳລັບການເລືອກຕັ້ງສະພາແຫ່ງຊາດທີ່ຈະມາເຖິງ.

# Bolivia ເປີດເຜີຍຮ່າງກົດໝາຍເພື່ອເສີມສ້າງການລົງທຶນ ແລະ ການຮ່ວມມືໃນຂະແໜງຍຸດທະສາດ




(Xinhua) - ລັດຖະບານໂບລິວີ ເປີດເຜີຍລາຍລະອຽດຂອງຮ່າງກົດໝາຍຊຸດໜຶ່ງ ເມື່ອວັນອັງຄານທີ 3 ກຸມພາຜ່ານມາ ໂດຍມີຈຸດປະສົງເພື່ອດຶງດູດການລົງທຶນທັງພາຍໃນ ແລະ ຕ່າງປະເທດ ໃນຂະແໜງການຂຸດຄົ້ນບໍ່ແຮ່, ໄຮໂດຣກາກບອນ ແລະ ພະລັງງານ ເພື່ອເສີມສ້າງການຮ່ວມມືສາກົນ ແລະ ວາງພື້ນຖານໃຫ້ແກ່ການເຕີບໂຕທາງເສດຖະກິດທີ່ຍືນຍົງ.

ໂຮເຊຫຼຸຍສ໌ລູໂປ(Jose Luis Lupo) ລັດຖະມົນຕີປະຈຳສຳນັກງານປະທານາທິບໍດີ ກ່າວວ່າ ມາດຕະການທາງກົດໝາຍເຫຼົ່ານີ້ ມີຈຸດປະສົງເພື່ອສ້າງຂອບກົດໝາຍເພື່ອດຶງດູດການລົງທຶນຂອງພາກເອກະຊົນທັງພາຍໃນ ແລະ ຕ່າງປະເທດ ເຂົ້າສູ່ຂະແໜງຍຸດທະສາດ ແລະ ຈະໃຫ້ການສະໜັບສະໜູນທາງກົດໝາຍແກ່ບັນດາລັດຖະດຳລັດເມື່ອບໍ່ດົນມານີ້ ທີ່ອອກແບບມາເພື່ອກະຕຸ້ນເສດຖະກິດ ແລະ ສ້າງສະພາບແວດລ້ອມທີ່ຄາດເດົາໄດ້ຫຼາຍຂຶ້ນສຳລັບນັກລົງທຶນ; ລູໂປ ກ່າວຕື່ມວ່າ ມາດຕະການເຫຼົ່ານີ້ ມີຈຸດປະສົງເພື່ອກຳຈັດອຸປະສັກດ້ານກົດລະບຽບ, ຫຼຸດຂັ້ນຕອນທາງລັດຖະການ ແລະ ເສີມສ້າງຫຼັກນິຕິທຳ ໂດຍການປະຕິຮູບນີ້ ມີຈຸດປະສົງເພື່ອສົ່ງເສີມການລົງທຶນ, ການຖ່າຍທອດເຕັກໂນໂລຊີ ແລະ ການເຕີບໂຕຂອງການສົ່ງອອກ.

ຮ່າງກົດໝາຍຊຸດນີ້ ຈະຖືກສົ່ງໄປຍັງສະພານິຕິບັນຍັດໃນກາງປີນີ້.

# ປະທານາທິບໍດີປາແລັດສະຕິນ ອອກລັດຖະດຳລັດ ຈັດການເລືອກຕັ້ງສະພາແຫ່ງຊາດ ໃນເດືອນພະຈິກ



(Xinhua) - ມາມູດ ອັບບາສ(MahmoudAbbas) ປະທານາທິບໍດີແຫ່ງລັດປາແລັດສະຕິນ ໄດ້ອອກລັດຖະດຳລັດເມື່ອວັນທີ 2 ກຸມພາຜ່ານມາ ໂດຍກຳນົດວັນທີ 1 ພະຈິກ 2026 ເປັນວັນເລືອກຕັ້ງສະພາແຫ່ງຊາດປາແລັດສະຕິນ (Palestinian Legislative Council - PNC), ລັດຖະດຳລັດດັ່ງກ່າວ ຮຽກຮ້ອງໃຫ້ຊາວປາແລັດສະຕິນທັງໃນດິນແດນທີ່ຖືກຍຶດຄອງ ແລະ ໃນຕ່າງປະເທດ ເຂົ້າຮ່ວມ "ເພື່ອຮັບປະກັນວ່າປະຊາຊົນປາແລັດສະຕິນ ຈະມີສ່ວນຮ່ວມຢ່າງກວ້າງຂວາງທີ່ສຸດເທົ່າທີ່ຈະເປັນໄປໄດ້ ບໍ່ວ່າພວກເຂົາຈະອາໄສຢູ່ໃສກໍຕາມ".

PNC ປະຕິບັດໜ້າທີ່ເປັນລັດຖະສະພາຂອງອົງການປົດປ່ອຍປາແລັດສະຕິນ (Palestine Liberation Organization - PLO) ແລະ ເປັນຕົວແທນຂອງກຸ່ມການເມືອງ, ສະຫະພັນ ແລະ ກຸ່ມຕ່າງໆຂອງປາແລັດສະຕິນທັງພາຍໃນແລະພາຍນອກດິນແດນປາແລັດສະຕິນ.

ອັບບາສ ກ່າວເມື່ອເດືອນມັງກອນວ່າ ກຳລັງດຳເນີນການຮ່າງລັດຖະທຳມະນູນຊົ່ວຄາວ ແລະ ກົດໝາຍກ່ຽວກັບພັກການເມືອງ ເພື່ອກະກຽມສຳລັບການເລືອກຕັ້ງ; ນອກຈາກນີ້, ເຂົາຍັງຢືນຢັນໃນເດືອນຕຸລາ 2025 ເຖິງຄວາມມຸ່ງໝັ້ນທີ່ຈະຈັດການເລືອກຕັ້ງປະທານາທິບໍດີ ແລະ ສະພາແຫ່ງຊາດ ພາຍໃນໜຶ່ງປີ ຫຼັງຈາກສິ້ນສຸດການຂັດແຍ້ງໃນເຂດກາຊາ.




## ຜູ້ສະໝັກ...

(ຕໍ່ຈາກໜ້າ 1)

ຮັບຜົນດີ, ມີຄວາມເປັນເອກະພາບໃນທົ່ວແຂວງ ທັງຮັບປະກັນການນຳພາຂອງພັກ, ສອດຄ່ອງກັບລັດຖະທຳມະນູນ, ກົດໝາຍ ແລະ ສະພາບຄວາມເປັນຈິງຂອງແຂວງ; ເພື່ອສຶກສາອົບຮົມໃຫ້ຜູ້ມີສິດປ່ອນບັດເລືອກຕັ້ງ ຮັບຮູ້ ແລະ ເຂົ້າໃຈແຈ້ງຕື່ມກ່ຽວກັບຄວາມໝາຍຄວາມສຳຄັນຂອງການເລືອກຕັ້ງ ແນໃສ່ເຊີດຊູລະດັບຄວາມຕື່ນຕົວທາງດ້ານການເມືອງຂອງປະຊາຊົນບັນດາເຜົ່າແລະຮັບປະກັນການປະຕິບັດສິດເປັນເຈົ້າຂອງປະເທດຊາດຂອງພົນລະເມືອງ ໃນການໄປໃຊ້ສິດປ່ອນບັດເລືອກຕັ້ງເອົາ ສສຊ ຢ່າງຄົບຖ້ວນ, ຖືກຕ້ອງຕາມລະບຽບຫຼັກການ;ເຮັດໃຫ້ຜູ້ມີສິດເລືອກຕັ້ງ ໄດ້ຮູ້ໄດ້ເຫັນຜູ້ສະໝັກຮັບເລືອກຕັ້ງແລະກໍໄດ້ຊີວະປະຫວັດ, ຄຸນສົມບັດ, ຄວາມຮູ້ຄວາມສາມາດ,ທັດສະນະ ແລະ ການເຄື່ອນໄຫວວຽກງານຂອງຜູ້ສະໝັກຮັບເລືອກຕັ້ງ ແລ້ວໃຊ້ສິດພື້ນຖານຂອງຕົນເພື່ອເລືອກເອົາບຸກຄົນທີ່ມີມາດຕະຖານເງື່ອນໄຂຖືກຕ້ອງ ແລະ ຄົບຖ້ວນ ເຂົ້າເປັນຕົວແທນແຫ່ງສິດອຳນາດຂອງປະຊາຊົນຢ່າງແທ້ຈິງ; ເພື່ອໃຫ້ຜູ້ສະໝັກຮັບເລືອກຕັ້ງ ໄດ້ຮັບຮູ້ກ່ຽວກັບຄວາມມຸ່ງມາດປາຖະໜາ ແລະ ສະພາບການດຳລົງຊີວິດຂອງປະຊາຊົນບັນດາເຜົ່າໃນເຂດເລືອກຕັ້ງຂອງຕົນ ແລະ ໄດ້ພົວພັນສະໜິດແໜ້ນກັບປະຊາຊົນຢູ່ໃນທ້ອງຖິ່ນທີ່ຕົນລົງສະໝັກຮັບເລືອກຕັ້ງ.

ໂຄງປະກອບຂອງຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 10 ແຂວງວຽງຈັນ ຊຸດທີ X ມີຈຳນວນ 14 ທ່ານ ຍິງ 5 ທ່ານ ເຊິ່ງເພດຍິງກວມເອົາ 35.7%; ມີຕົວແທນຈາກເຜົ່າລາວ 11 ທ່ານ, ເຜົ່າກຶມມຸ 1 ທ່ານ, ເຜົ່າມົ້ງ 2 ທ່ານ; ມາຈາກສູນກາງ 5 ທ່ານ ຍິງ 2 ທ່ານ, ມາຈາກແຂວງ 9 ທ່ານ ຍິງ 3 ທ່ານ ທີ່ເປັນຕົວແທນຈາກອົງການຈັດຕັ້ງພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ກຳລັງປ້ອງກັນຊາດ;ອາຍຸກະສຽນລະຫວ່າງ 46-55 ປີ ກວມເອົາ 50%, 56-60 ປີ ກວມເອົາ 42.8%, 60 ປີຂຶ້ນໄປ ກວມເອົາ 7.1%; ມີຜູ້ສະໝັກໃໝ່ 11 ທ່ານ ຍິງ 4 ທ່ານແລະຜູ້ເກົ່າສືບຕໍ່ສະໝັກ 3 ທ່ານ ຍິງ 1 ທ່ານ. ທົ່ວແຂວງວຽງຈັນ ມີ 511 ໜ່ວຍປ່ອນບັດ, ມີຈຳນວນພົນລະເມືອງ 514,471 ຄົນ ຍິງ 246,764 ຄົນແລະຜູ້ມີສິດປ່ອນບັດເລືອກຕັ້ງ ມີ 277,228 ຄົນ ຍິງ 133,114 ຄົນ.

ໃນການໂອ້ລົມສົນທະນາສຽງ, ຜູ້ສະໝັກຮັບເລືອກຕັ້ງເປັນ ສສຊ ໄດ້ຜັດປ່ຽນກັນສະເໜີຊື່ ແລະ ປະຫວັດການເຄື່ອນໄຫວຂອງຕົນໃນໄລຍະຜ່ານມາ ພ້ອມທັງສະເໜີຈຸດປະສົງໃນການລົງເຄື່ອນໄຫວ ເຊິ່ງເລີ່ມຈາກຜູ້ສະໝັກນ້ຳເບີ1-14ຕາມລຳດັບ;ຜູ້ສະໝັກຍັງຮຽກຮ້ອງໃຫ້ຜູ້ມີສິດເລືອກຕັ້ງ ຈົ່ງໄດ້ຮ່ວມຈິດຮ່ວມໃຈເຂົ້າຮ່ວມຂະບວນການເລືອກຕັ້ງຄັ້ງນີ້ ໃຫ້ກາຍເປັນປາງບຸນໃຫຍ່ຂອງຊາດ, ເລືອກໄດ້ຜູ້ສະໝັກທີ່ມີມາດຕະຖານເງື່ອນໄຂຄົບຖ້ວນ, ມີຄວາມຮູ້ຄວາມສາມາດ, ມີວິໄສທັດທີ່ກວ້າງໄກ ເພື່ອມາເປັນຕົວແທນໃຫ້ປະຊາຊົນເຂົ້າໄປຢູ່ໃນສະພາແຫ່ງຊາດ.

**(ນາງ ສຸພາວັນ ທອມສະນິດ)**

ເຫັນໄວ້ ໄດ້ຍິນມາ

❖ ວິເສດ ສະແຫວງສຶກສາ

# ຕັດໄມ້ທຳລາຍປ່າ ໄພພິບັດຖາມຫາ

ຂ່າວຮ້ອນໆອອກມາຈາກອິນໂດເນເຊຍ ຫວ່າງບໍ່ເຫິງມານີ້ບອກວ່າ ທ່ານລັດຖະມົນຕີກະຊວງປ່າໄມ້ຂອງປະເທດນີ້ ໄດ້ອອກມາປະກາດຢ່າງຂຶງຂັງມັງມໍວ່າຈະຈິກຖິ້ມໃບອະນຸຍາດຂຸດຄົ້ນໄມ້ກວ່າ 20 ສະບັບ ໃນທົ່ວປະເທດ ຍ້ອນມີການພົບວ່າເຫດນ້ຳຖ້ວມໃຫຍ່ຢູ່ເກາະຊູມາຕຣາ ໃນຕົ້ນເດືອນທັນວາປີຜ່ານມານີ້ນັ້ນ ເກີດມາຈາກການຕັດໄມ້ທຳລາຍປ່າ ເຊິ່ງເຮັດໃຫ້ມີຜູ້ເສຍຊີວິດກວ່າ 1,000 ຄົນ, ບ້ານເຮືອນຖືກຂີ້ຕົມ ແລະ ຂີ້ເຫຍື້ອທັບຖົມ ບໍ່ນັບຜູ້ອົບພະຍົບໜີຕາຍກໍຄືຄວາມເສຍຫາຍທາງເສດຖະກິດ. ບັນດານັກເຄື່ອນໄຫວເພື່ອປົກປ້ອງຮັກສາສິ່ງແວດລ້ອມ ກໍຄືເຫຼົ່າຊ່ຽວຊານຕ່າງກໍອອກມາຊີ້ນິ້ວວ່າ ເປັນຍ້ອນໃບອະນຸຍາດອຸບາດຂາດການຮິ່ນຕອງນີ້ລະ ຈຶ່ງເກີດມີອຸທົກກະໄພມໍລະນະຄັ້ງນີ້; ທາງກະຊວງປ່າໄມ້ ບໍ່ພຽງແຕ່ງ່ຽງຫູຟັງຄຳວິຈານ ແຕ່ຍັງໄດ້ປະກາດສັ່ງວ່າ ໃບອະນຸຍາດຂຸດຄົ້ນໄມ້ ຈຳນວນ 22 ຊຸດ ຈະຖືກຈິກຖິ້ມລົງຖັງຂີ້ເຫຍື້ອໂດຍບໍ່ມີເງື່ອນໄຂ.

ເຫັນບໍ່ລະ ບ້ານເພິ່ນເມືອງທ່ານເຂົາເດັດຂາດເອົາແທ້ໆ ເມື່ອກວດພົບການກະທຳຜິດກໍຕ້ອງແກ້ຢ່າງທັນຄວັນໂລດ, ເຮັດແນວນີ້ສັງຄົມຈຶ່ງຈະມີສັດທາຕໍ່ຄວາມສັກສິດຂອງກົດໝາຍ!.

ແຈ້ງຊັບສິນຕ້ອງແຈ້ງແທ້ໆ ບໍ່ແມ່ນແຈ້ງເພື່ອເຊື່ອງອຳ

ນັບແຕ່ປີ 2026 ເປັນຕົ້ນໄປ ທາງການຍີ່ປຸ່ນພາຍໃຕ້ລັດຖະບານຂອງທ່ານ ນາງ ຊານາເອະ ຕາກາອິຈິ ນາຍົກຍິງຂອງຍີ່ປຸ່ນ ຈະເຄັ່ງຄັດຮັດກຸມເລື່ອງການແຈ້ງຊັບສິນຂອງຄົນຕ່າງປະເທດທີ່ອາໄສຢູ່ຍີ່ປຸ່ນ ຄືຊາວຕ່າງປະເທດທຸກຄົນ ຕ້ອງແຈ້ງຊັບສິນຂອງຕົນລົງຖານຂໍ້ມູນສະເພາະ; ມາດຕະການນີ້ ມີເປົ້າໝາຍເພື່ອຮັບປະກັນຄວາມໝັ້ນຄົງແຫ່ງຊາດ ແລະ ຄວາມໝັ້ນຄົງທາງເສດຖະກິດ, ມາດຕະການນີ້ ຈະຊ່ວຍໃຫ້ທາງການຍີ່ປຸ່ນສາມາດຕິດຕາມຊັບສິນທີ່ມີຕົວຈິງໃນການຄອບຄອງຂອງຄົນຕ່າງປະເທດ. ວ່າກັນວ່າ ລະບຽບການແຈ້ງຊັບສິນທີ່ເຄັ່ງຄັດນີ້ ຈະເຮັດໃຫ້ຄົນຕ່າງປະເທດປະເຊີນກັບຂໍ້ຈຳກັດຫຼາຍຂຶ້ນໃນການຊື້ອະສັງຫາລິມະຊັບ, ສ່ວນວ່າຈະມີຂໍ້ຈຳກັດຫຍັງແດ່ນັ້ນ ຂ່າວບໍ່ໄດ້ໃຫ້ລາຍລະອຽດ; ແຕ່ເວົ້າ ຫຼື ບໍ່ເວົ້າ ການກຳນົດໃຫ້ຄົນຕ່າງປະເທດແຈ້ງຊັບສິນທີ່ຄອບຄອງຕົວຈິງນັ້ນ ຄົງຈະຊ່ວຍກຳຈັດການແອບແຝງເປັນນາຍໜ້າຂອງຄົນເຈົ້າຂອງປະທດເຊັ່ນ: ເປັນຫຸ່ນເຊີດອ້າງວ່າເປັນເຈົ້າຂອງຊັບສິນແທ້ໆ ປາກົດການຫຍໍ້ທໍ້ນີ້ມັກເກີດຂຶ້ນໃນສັງຄົມທີ່ກົດໝາຍບໍ່ເປັນກົດໝາຍ ແຕ່ເປັນພຽງກົດໝູ່!.

ຜະເດັດເສິກຢ່າງເດັດຂາດ ຕ້ານຢາສູບໄຟຟ້າ

ທ່ານ ຈູນເຄບລີ ອາກມັດ (Dzulkebly Akmad) ລັດຖະມົນຕີກະຊວງສາທາລະນະສຸກມາເລເຊຍ ໄດ້ອອກມາປະກາດກ້ອງວ່າ ຈະຈັດການເດັດຂາດກັບຢາສູບໄຟຟ້າ ແລະ ມາດຕະການດັ່ງກ່າວ ຈະເຮັດສຳເລັດໃນປີ 2026; ໃນຊຸມປີຫຼັງໆມານີ້ ຈຳນວນຜູ້ທີ່ໄດ້ຮັບຜົນກະທົບດ້ານສຸຂະພາບຈາກຢາສູບໄຟຟ້າຢູ່ມາເລເຊຍນັ້ນ ໄດ້ເພີ່ມຂຶ້ນ ໂດຍສະເພາະແມ່ນສຸຂະພາບຈິດ, ທ່ານລັດຖະມົນຕີໄດ້ເນັ້ນວ່າເລື່ອງກຳຈັດຢາສູບໄຟຟ້ານັ້ນຈະບໍ່ມີຄຳວ່າ "ຖ້າວ່າ" ບໍ່ມີຄຳວ່າຈະ "ເຮັດ ຫຼື ບໍ່" ເພາະເລື່ອງນີ້ ຄະນະລັດຖະບານໄດ້ຕົກລົງຮັບຮອງເອົາແລ້ວ ເຫຼືອພຽງວ່າຈະເລີ່ມຕົ້ນເມື່ອໃດເທົ່ານັ້ນ.

ທັງສາມເລື່ອງຍ່ອຍທີ່ເອົາມາເວົ້າໃຫ້ຟັງເທື່ອນີ້ ສັງລວມມາຈາກຂ່າວຕ່າງປະເທດໃນໜ້າໜັງສືພິມວຽງຈັນທາມ ສະບັບວັນທີ 17 ທັນວາ 2025.




#ບ່າວກະບື

**ເມຍ:** "ທີ່ຮັກ, ເປັນຫຍັງອ້າຍຈຶ່ງຢືນຕາກແດດຢູ່ຄືແນວນັ້ນ?"

**ຜົວ:** "ອ້າຍພະຍາຍາມຕາກເຫື່ອໃຫ້ມັນແຫ້ງ"

#BAOKBU

**WIFE:** "Dear, why are you standing in the sun?"

**HUSBAND:** "Trying to dry my sweat"



## ເຝິກອົບຮົມ...

(ຕໍ່ຈາກໜ້າ 5)

ຊຸດທີ V; ເອກະສານ ເພີ່ມທະວີການນຳພາແນວຄິດ ແລະ ເສີມຂະຫຍາຍສິດປະຊາທິປະໄຕຂອງປະຊາຊົນລາວບັນດາເຜົ່າ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຄຳແນະນຳຂອງຄະນະກຳມະການເລືອກຕັ້ງລະດັບຊາດ ວ່າດ້ວຍການໂຄສະນາ, ປຸກລະດົມຂະບວນການ ແລະ ຍ້ອງຍໍ; ຄຳຖາມ-ຄຳຕອບ ກ່ຽວກັບການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າຕໍ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເອກະສານເນື້ອໃນສຳຄັນຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V ແລະ ເອກະສານຄຳແນະນຳກ່ຽວກັບໂຄງປະກອບ, ບຸກຄະລາກອນ ແລະ ຜູ້ຮັບສະໝັກເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດ ຊຸດທີX ແລະສະມາຊິກສະພາປະຊາຊົນຂັ້ນແຂວງ ຊຸດທີ V; ເຊື່ອມຊຶມ ແລະ ເສີມຂະຫຍາຍ ໃນການຈັດຕັ້ງປະຕິບັດແຜນດຳເນີນງານຂອງຄະນະກຳມະການເລືອກຕັ້ງລະດັບຊາດ ເພື່ອການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງຊຸດທີV; ຄຳແນະນຳກ່ຽວກັບການແຕ່ງຕັ້ງບັນດາອະນຸກຳມະການ, ຄະນະກຳມະການເລືອກຕັ້ງຂັ້ນເມືອງ, ນະຄອນ, ການເກັບກຳສະຖິຕິຜູ້ມີສິດປ່ອນບັດເລືອກຕັ້ງ, ກຳນົດໜ່ວຍປ່ອນບັດເລືອກຕັ້ງແລະການແຕ່ງຕັ້ງຄະນະຮັບຜິດຊອບໜ່ວຍປ່ອນບັດເລືອກຕັ້ງ; ຄຳແນະນຳກ່ຽວກັບລະບຽບການຄຸ້ມຄອງງົບປະມານຮັບໃຊ້ແກ່ການເລືອກຕັ້ງສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V; ຄຳແນະນຳກ່ຽວກັບວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຄຳຖາມ-ຄຳຕອບ ກ່ຽວກັບການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນລາວບັນດາເຜົ່າຕໍ່ການເລືອກສະມາຊິກສະພາແຫ່ງຊາດຊຸດທີX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີV;ຄຳຖາມ-ຄຳຕອບກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ຂອງສະພາແຫ່ງຊາດແລະສະພາປະຊາຊົນຂັ້ນແຂວງ; ຄຳຖາມ-ຄຳຕອບ ກ່ຽວກັບການເລືອກສະມາຊິກສະພາແຫ່ງຊາດ ຊຸດທີ X ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ V.

**(ສົມວິຈິດ ໄຊມົນຕີ)**

## ສພຂ...

(ຕໍ່ຈາກໜ້າ 6)

ລັດຂັ້ນແຂວງ, ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 17, ສະມາຊິກສະພາປະຊາຊົນແຂວງ, ບັນດາພະແນກການ ແລະ ພາກສ່ວນຕ່າງໆເຂົ້າຮ່ວມ.

ກອງປະຊຸມໄດ້ພິຈາລະນາ, ຮັບຮອງເອົາບົດລາຍງານຂອງເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ5ປີ(2021-2025), ປະຈຳປີ 2025, ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດຂັ້ນແຂວງ5ປີ(2021-2025)ປະຈຳປີ2025ແລະທິດທາງແຜນການປະຈຳປີ 2026; ການດັດແກ້ງົບປະມານແຫ່ງລັດລາຍຮັບ-ລາຍຈ່າຍ ວິຊາການຂອງຂະແໜງການຂັ້ນທ້ອງຖິ່ນປີ 2025 ແລະ ເງິນເກີນແຜນປີ 2024; ຕິດພັນກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ; ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວໄລຍະ 5 ປີ, ປະຈຳປີ 2025 ແລະ ຮ່າງແຜນການເຄື່ອນໄຫວປະຈຳປີ 2026, ບົດລາຍງານຂອງອົງການກວດສອບແລະອົງການກວດກາ; ບົດລາຍງານຜົນການກວດສອບບົດສະຫຼຸບຂາດຕົວການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ຂັ້ນແຂວງ ປະຈຳປີ 2024 ແລະ ບົດລາຍງານການຕິດຕາມກວດກາຕາມຜົນການກວດສອບປະຈຳປີ2023 ຂອງອົງການກວດກາແຫ່ງລັດຂັ້ນແຂວງ; ບົດລາຍງານ ຂອງສານປະຊາຊົນແຂວງ ແລະ ອົງການໄອຍະການປະຊາຊົນແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານໃນໄລຍະ 5 ປີຜ່ານມາ, ວຽກງານປະຈຳປີ 2025 ແລະ ທິດທາງ ປະຈຳປີ 2026; ບົດລາຍງານກ່ຽວກັບການຈັດຕັ້ງແຜນການເຄື່ອນໄຫວວຽກງານ ໄລຍະ 5 ປີ ຜ່ານມາ, ວຽກງານປະຈຳປີ 2025 ແລະ ທິດທາງ ປະຈຳປີ 2026 ຂອງສະພາປະຊາຊົນແຂວງ ແລະ ຮັບຮອງເອົາການສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍ ຈຳນວນ 03 ສະບັບ; ໃນນັ້ນ ສ້າງໃໝ່ 2 ສະບັບ, ປັບປຸງ 1 ສະບັບ.

**(ວິນັດ ສີສຸລາດ)**

ທະນາຄານພັດທະນາລາວ
LDB Bank

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ປອ. ພິດສະໄໝ ບຸນວິໄລ

**ຄະນະບັນນາທິການ**
ທ່ານ ສຸລະສັກ ສຸວັນນະວົງ ຫົວໜ້າ ບກ
ທ່ານ ວິລະພັດ ພາບວິໄຊ ຮອງຫົວໜ້າ ບກ
ທ່ານ ບຸນເກີດ ວົງໄຊຍາ ຮອງຫົວໜ້າ ບກ
ທ່ານ ແກ້ວລະກາ ຊ້ອຍໄຊຍະ ຮອງຫົວໜ້າ ບກ

**ກອງບັນນາທິການ**
ທ່ານ ນາງ ວັນນາລິນ ສຸລິວົງສັກ
ທ່ານ ນາງ ໄຊໂສພາພອນ ມິ່ງມຸງຄຸນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ອາລິນ ສຸພົມມະປະດິດ

**ອອກແບບ - ຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ

**ຮູບພາບປະກອບ**
ທ່ານ ສອນສັກ ວັນວິໄຊ